ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຄໍາມ່ວນ

ເລກທີ 1478/ຈຂ.

ຄໍາມ່ວນ, ວັນທີ 14.8.2024

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ
## ຂອງພະແນກກະສິກໍາ ແລະ ປ່າໄມ້ແຂວງ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015
- ອີງຕາມ ມະຕິຂອງສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກ ແລະ ບຸກຄະລາກອນ ຂອງແຂວງ ສະບັບເລກທີ 50/ສພຂ.ຄມ, ລົງວັນທີ 31 ພຶດສະພາ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກະສິກໍາ ແລະ ປ່າໄມ້ ແຂວງ/ນະຄອນຫຼວງວຽງຈັນ ສະບັບເລກທີ 1591/ກປ, ລົງວັນທີ 27 ທັນວາ 2021;
- ອີງຕາມ ໜັງສືສະເໜີ ຂອງພະແນກກະສິກໍາ ແລະ ປ່າໄມ້ແຂວງ ສະບັບເລກທີ 1609/ກປຂ, ລົງວັນທີ 05 ສິງຫາ 2024;
- ອີງຕາມ ໜັງສືສະເໜີ ຂອງພະແນກພາຍໃນແຂວງ ສະບັບເລກທີ 1173/ພນຂ, ລົງວັນທີ 06 ສິງຫາ 2024.

## ເຈົ້າແຂວງ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກໍານົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງພະແນກກະສິກໍາ ແລະ ປ່າໄມ້ ແຂວງ ເພື່ອເປັນບ່ອນອີງທາງດ້ານນິຕິກໍາໃຫ້ແກ່ການຈັດຕັ້ງ ແລະ ເຄື່ອນໄຫວຂອງພະແນກ ແນໃສ່ຈັດຕັ້ງປະຕິບັດວຽກງານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ໃຫ້ມີປະສິດທິຜົນສູງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ພະແນກກະສິກໍາ ແລະ ປ່າໄມ້ ແຂວງຄໍາມ່ວນ ຂຽນເປັນຕົວອັກສອນຫຍໍ້ວ່າ "ກປຂ" ແມ່ນກົງຈັກການຈັດຕັ້ງໜຶ່ງຂອງແຂວງ, ມີພາລະບົດບາດ ເປັນເສນາທິການໃຫ້ແກ່ ເຈົ້າແຂວງ ແລະ ລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ໃນການຄຸ້ມຄອງວຽກງານກະສິກໍາ, ປ່າໄມ້, ການປຸງແຕ່ງກະສິກໍາ ຂັ້ນຕົ້ນ ແລະ ວຽກງານພັດທະນາຊົນນະບົດ ພາຍໃນແຂວງ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ພະແນກກະສິກຳ ແລະ ປ່າໄມ້ ແຂວງຄຳມ່ວນມີໜ້າທີ່ດັ່ງລຸ່ມນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ສະພາແຂວງ, ລັດຖະບັນຍັດຂອງປະທານປະເທດ, ດຳລັດ, ມະຕິ ແລະ ນິຕິກຳຂອງລັດຖະບານ, ນາຍົກລັດຖະມົນຕີ, ລັດຖະມົນຕີ ແລະ ເຈົ້າແຂວງຄຳມ່ວນ;
2. ເຜີຍແຜ່ເຊື່ອມຊຶມ ແລະ ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ແຜນຍຸດທະສາດ ແລະ ມະຕິຕົກລົງຂອງລັດຖະບານ, ກະຊວງ ແລະ ອົງການປົກຄອງ ແຂວງຄຳມ່ວນ ກ່ຽວກັບວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ມາເປັນແຜນງານ, ແຜນການ, ໂຄງການ ລະອຽດຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
3. ຄົ້ນຄວ້າ ສ້າງ, ປັບປຸງ ບັນດານິຕິກຳ, ລະບຽບການອັນຈຳເປັນສຳລັບການຄຸ້ມຄອງວຽກງານຂອງຂະແໜງການຕົນ ໂດຍຜັນຂະຫຍາຍບັນດານິຕິກຳ, ລະບຽບການຕ່າງໆ ຂອງ ລັດຖະບານ, ກະຊວງກະສິກຳ ແລະ ປ່າໄມ້ ວາງອອກຕາມລະບຽບການແບ່ງຂັ້ນຄຸ້ມຄອງ ເພື່ອສະເໜີຕໍ່ ເຈົ້າແຂວງຄຳມ່ວນ ພິຈາລະນາຮັບຮອງ;
4. ສຸມທຸກກຳລັງແຮງຊຸກຍູ້ການຜະລິດສະບຽງອາຫານໃຫ້ພຽງພໍ ເພື່ອຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ, ຮັບປະກັນໃຫ້ມີວັດຖຸດິບປ້ອນໂຮງງານປຸງແຕ່ງກະສິກຳ, ມີຜົນຜະລິດສົດ, ສະອາດ ແລະ ປອດໄພ ເພື່ອຊົມໃຊ້ພາຍໃນແຂວງ ແລະ ສະໜອງໃຫ້ຕະຫຼາດພາຍໃນປະເທດ ເພື່ອທົດແທນການນຳເຂົ້າຈາກຕ່າງປະເທດ ເທື່ອລະກ້າວ;
5. ຍູ້ແຮງການຜະລິດກະສິກຳ ແລະ ປ່າໄມ້ ເປັນສິນຄ້າແບບຫຼາກຫຼາຍ, ມີຄຸນນະພາບ, ກຳນົດເຂດການຜະລິດ ຕິດພັນກັບການປຸງແຕ່ງ ແລະ ຄວາມຕ້ອງການຂອງຕະຫຼາດທັງພາຍໃນ ແລະ ຕ່າງປະເທດ ຕາມທ່າແຮງໄດ້ປຽບຂອງທ້ອງຖິ່ນ, ຊຸກຍູ້ ຄອບຄົວຕົວແບບ, ການຜະລິດເປັນຟາມ, ກຸ່ມການຜະລິດ, ຫົວໜ່ວຍການຜະລິດ, ໃນການຜະລິດສິນຄ້າກະສິກຳສະອາດ (ກະສິກຳອິນຊີ ແລະ ກະສິກຳທີ່ດີ) ເປັນສິນຄ້າ ຕາມທ່າແຮງໄດ້ປຽບຂອງທ້ອງຖິ່ນ ເພື່ອສົ່ງອອກຕ່າງປະເທດ ໂດຍສອດຄ່ອງກັບມາດຕະຖານສຸຂານາໄມພືດ ແລະ ສັດ ຂອງປະເທດຄູ່ຄ້າ;
6. ຕິດຕາມກວດກາມາດຕະຖານດ້ານເຕັກນິກ ແລະ ຄຸນນະພາບ ກ່ຽວກັບຜະລິດຕະພັນກະສິກຳ, ປ່າໄມ້, ປັດໄຈການຜະລິດ, ອຸປະກອນ ແລະ ກົນຈັກກະສິກຳ, ໂຮງງານປຸງແຕ່ງກະສິກຳ ແລະ ປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງ; ຊຸກຍູ້, ສົ່ງເສີມ, ພັດທະນາຕະຫຼາດຂາຍຍົກ-ຂາຍຍ່ອຍ ຜົນຜະລິດກະສິກຳ ແລະ ປ່າໄມ້ ຕາມກົດໝາຍ ແລະ ລະບຽບການ;
7. ຄຸ້ມຄອງ, ກວດກາ, ຢັ້ງຢືນກະສິກຳສະອາດ, ສຸຂານາໄມພືດ ແລະ ສັດ ໃນການນຳເຂົ້າ, ສົ່ງອອກຜະລິດຕະພັນກະສິກຳ, ປ່າໄມ້ ຕາມທີ່ໄດ້ກຳນົດໃນກົດໝາຍ ແລະ ລະບຽບການ ຂອງຂະແໜງກະສິກຳ ແລະ ປ່າໄມ້; ຄຸ້ມຄອງຕິດຕາມ, ກວດກາຜົນຜະລິດກະສິກຳ, ປັດໄຈການຜະລິດ ເປັນຕົ້ນ ຝຸ່ນ, ຢາປາບສັດຕູພືດ, ເຄມີກະສິກຳ, ຢາປົວພະຍາດສັດ, ຢາວັກຊິນ, ອາຫານສັດ, ແນວພັນພືດ, ແນວພັນສັດ, ແນວພັນປາ-ສັດນ້ຳ, ກົນຈັກ ກະສິກຳ ແລະ ອຸປະກອນການຜະລິດກະສິກຳ ພ້ອມທັງເອື້ອຍອຳນວຍຄວາມສະດວກ ໃນການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສິນຄ້າກະສິກຳ ແລະ ປ່າໄມ້ ຈາກປະເທດຕົ້ນທາງຫາປະເທດປາຍທາງ ຕາມກົດໝາຍ ແລະ ລະບຽບການ;

8. ຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານອຸດສາຫະກໍາປຸງແຕ່ງກະສິກໍາ ແລະ ປ່າໄມ້ ເຊັ່ນ: ໂຮງສີເຂົ້າ, ໂຮງງານປຸງແຕ່ງແປ້ງມັນຕົ້ນ, ໂຮງງານປຸງແຕ່ງອ້ອຍ, ໂຮງງານຂ້າສັດ, ໂຮງງານຜະລິດຢາປົວພະຍາດສັດ, ໂຮງງານຜະລິດຢາວັກຊີນ, ໂຮງງານຜະລິດອຸປະກອນລ້ຽງສັດ-ສັດຕະວະແພດ, ໂຮງງານຜະລິດ ອາຫານສັດ, ໂຮງງານປຸງແຕ່ງໄມ້, ໂຮງເລື່ອຍ, ໂຮງຊອຍ, ໂຮງເຟີນີເຈີ, ໂຮງງານຖ່ານ/ເຕົາເຜົາຖ່ານ, ໂຮງງານປຸງແຕ່ງຢາງພາລາ ແລະ ເຄື່ອງປ່າຂອງດົງ, ໂຮງງານຜະລິດຝຸ່ນເຄມີ, ຝຸ່ນຊີວະພາບ ແລະ ອິງຄະທາດ, ໂຮງງານຄັດແຍກເມັດພັນ ແລະ ຫຸ້ມຫໍ່ຜົນຜະລິດກະສິກໍາ ຕາມການແບ່ງຂັ້ນຄຸ້ມຄອງ, ກົດໝາຍ ແລະ ລະບຽບການ ໃຫ້ເປັນລະບົບຕໍ່ອງໂສ້ໃນການຄຸ້ມຄອງກໍານົດແຜນການຜະລິດ, ການປຸງແຕ່ງ ແລະ ການ ຕະຫຼາດຢ່າງກົມກຽວ;

9. ຄຸ້ມຄອງ, ຕິດຕາມ, ກວດກາ ການນໍາໃຊ້ສານເຄມີເຂົ້າໃນການຜະລິດກະສິກໍາ ເປັນຕົ້ນຝຸ່ນເຄມີ, ຢາປາບສັດຕູພືດ, ຢາຂ້າຫຍ້າ, ສານຄວບຄຸມການຈະເລີນເຕີບໂຕຂອງພືດ, ການຕັດແຕ່ງພັນທຸກໍາ (GMO), ຢາປົວພະຍາດສັດ, ຢາວັກຊີນ, ຄລີນິກປົວສັດ, ອາຫານສັດສໍາເລັດຮູບ, ວັດຖຸດິບສໍາລັບການຜະລິດຢາ ແລະ ອາຫານສັດ ແລະ ສານເຄມີອື່ນໆ ໃຫ້ໄດ້ຕາມມາດຕະຖານກະສິກໍາສະອາດ;

10. ຄຸ້ມຄອງ ແລະ ພັດທະນາລະບົບຊົນລະປະທານຫຼາຍຮູບແບບ ຕາມການແບ່ງຂັ້ນຄຸ້ມຄອງ ໂດຍນໍາໃຊ້ນໍ້າໜ້າດິນ ແລະ ນໍ້າໃຕ້ດິນ, ນໍາໃຊ້ພະລັງງານທົດແທນ ເຂົ້າໃນການສູບນໍ້າ ແລະ ລະບົບນໍ້າແບບໄຫຼເຂົ້າເອງໃນບ່ອນທີ່ມີເງື່ອນໄຂ ແລະ ສ້າງ ໂຄງລ່າງລະບົບປ້ອງກັນ-ລະບາຍນໍ້າ ເພື່ອຕ້ານແລ້ງ, ຕ້ານຖ້ວມ ແລະ ນໍາໃຊ້ນໍ້າຊົນລະປະທານ ໃຫ້ມີປະສິດທິພາບສູງ ຕິດພັນກັບການພັດທະນາຊົນລະກະເສດ ຕາມທິດທັນເປັນອຸດສາຫະກໍາ, ທັນສະໄໝ ແລະ ຍືນຍົງ; ສໍາຫຼວດ, ຕິດຕາມ, ຄຸ້ມຄອງການກໍ່ສ້າງ ແລະ ພັດທະນາລະບົບຊົນລະປະທານຂະໜາດກາງ ແລະ ນ້ອຍ ຕາມທ່າແຮງຂອງທ້ອງຖິ່ນ, ສ້າງຄວາມເຂັ້ມແຂງໃຫ້ກຸ່ມຜູ້ນໍາໃຊ້ນໍ້າ ແລະ ຄຸ້ມຄຸ້ມຄ້ອງນໍາໃຊ້ລະບົບຊົນລະປະທານ ໃຫ້ມີຄວາມຍືນຍົງ;

11. ຊຸກຍູ້, ສົ່ງເສີມ ແລະ ຖ່າຍທອດເຕັກນິກ, ເຕັກໂນໂລຊີກ່ຽວກັບການປູກ, ການລ້ຽງ ແລະ ການປຸງແຕ່ງ; ຈັດຕັ້ງການຜະລິດຂອງຊາວກະສິກອນເປັນກຸ່ມ ຫຼື ສະຫະກອນ; ຈັດຝຶກອົບຮົມ ທັກສະກະສິກໍາສະໄໝໃໝ່ ໃຫ້ບຸກຄົນ ຫຼື ສະມາຊິກກຸ່ມ ໃນດ້ານການບໍລິຫານຈັດການ, ການເຂົ້າເຖິງຕະຫຼາດ ແລະ ແຫຼ່ງທຶນ, ຊຸກຍູ້, ສົ່ງເສີມການນໍາໃຊ້ກົນຈັກ, ການສະໜັບສະໜູນພື້ນຖານໂຄງລ່າງ ດ້ານການປຸງແຕ່ງ, ຫຸ້ມຫໍ່, ການເກັບຮັກສາ, ການຕະຫຼາດໃນບ່ອນທີ່ມີຄວາມຈໍາເປັນ;

12. ພັດທະນາສູນບໍລິການເຕັກນິກກະສິກໍາ ຂອງແຂວງຄໍາມ່ວນ, ສະຖານີບໍລິການເຕັກນິກກະສິກໍາຂອງເມືອງ ໃຫ້ເຂັ້ມແຂງ, ຮັບປະກັນການເຄື່ອນໄຫວໃຫ້ມີປະສິດທິພາບ ດ້ວຍການປະກອບທຶນ, ພະນັກງານວິຊາການທີ່ມີຄວາມຮູ້-ຄວາມສາມາດ, ປະກອບວັດຖຸ-ເຕັກນິກ ແລະ ເຕັກໂນໂລຊີທັນສະໄໝໃຫ້ແກ່ສູນ, ສະຖານີເພື່ອຖ່າຍທອດບົດຮຽນ, ເຕັກໂນໂລຊີການປູກ-ການລ້ຽງ, ການປຸງແຕ່ງທັງເປັນບ່ອນສາທິດໃຫ້ແກ່ຊາວກະສິກອນ, ຜູ້ປະກອບການ, ນັກສຶກສາ ແລະ ສັງຄົມ;

13. ສົມທົບກັບກົມວິຊາການ ແລະ ພາກສ່ວນກ່ຽວຂ້ອງຂັ້ນສູນກາງ, ສໍາຫຼວດວິໄຈດິນ, ສ້າງແຜນທີ່ດິນກະສິກໍາ, ແບ່ງເຂດການຜະລິດ (ເຂດປູກ, ເຂດລ້ຽງສັດ, ສັດນໍ້າ ແລະ ເຂດປ່າໄມ້), ພັດທະນາທີ່ດິນກະສິກໍາໃຫ້ເໝາະສົມກັບການຜະລິດແຕ່ລະເຂດແຄວ້ນ, ດໍາເນີນການປັກຫຼັກໝາຍເຂດດິນສະຫງວນໄວ້ເພື່ອການກະສິກໍາ, ຕິດຕາມກວດກາການນໍາໃຊ້ໃຫ້ຖືກຕາມເປົ້າໝາຍ, ກົດໝາຍ ແລະ ລະບຽບການ;

14. ຄຸ້ມຄອງປົກປັກຮັກສາປ່າໄມ້ ຕາມ 3 ລະບົບປະເພດປ່າ (ປ່າສະຫງວນແຫ່ງຊາດ ຫຼື ອຸທິຍານແຫ່ງຊາດ, ປ່າປ້ອງກັນແຫ່ງຊາດ ແລະ ປ່າຜະລິດ) ຕາມການແບ່ງຂັ້ນຄຸ້ມຄອງ, ກໍານົດມາດຕະການ ເພື່ອຟື້ນຟູປ່າໄມ້ ແລະ ປົກປັກຮັກສາແຫຼ່ງນໍ້າ-ຄວາມສົມດຸນຂອງລະບົບນິເວດ ແລະ ຊີວະນາໆພັນ ພ້ອມທັງການປ້ອງກັນໄຟໄໝ້ລາມປ່າ; ສົ່ງເສີມການຟື້ນຟູບູລະນະປ່າໄມ້ ແລະ ການປູກໄມ້ເປັນສິນຄ້າຕິດພັນກັບການສົ່ງເສີມການທ່ອງທ່ຽວທໍາມະຊາດ, ການພັດທະນາກະສິກໍາ, ປ່າໄມ້ ແລະ ການປູກ-ການລ້ຽງສັດ ແບບປະສົມ

ປະສານ, ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການຜະລິດກະສິກໍາ, ການທໍາລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ແລະ ຍູ້ແຮງການຄ້າຂາຍສິນເຊື່ອກາກບອນປ່າໄມ້ ໃນເຂດປ່າໄມ້ທີ່ມີເງື່ອນໄຂຕາມທິດສີ ຂຽວ ແລະ ຍືນຍົງ;

15. ພັດທະນາພື້ນຖານໂຄງລ່າງ ທີ່ຕິດພັນກັບວຽກງານກະສິກໍາ ແລະ ປ່າໄມ້ ໃນເຂດຊົນນະບົດ ຕາມການແບ່ງຂັ້ນຄຸ້ມຄອງ; ພັດທະນາອາຊີບ ແລະ ປັບປຸງລະບົບການຈັດຕັ້ງການຜະລິດ ເພື່ອສ້າງລາຍຮັບ, ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກ ໃຫ້ແກ່ຊາວຊົນນະບົດ; ເປັນໃຈກາງປະສານງານກັບບັນດາພະແນກການ ຂອງແຂວງໃນການພັດທະນາຊົນນະບົດຮອບດ້ານ ຕາມພາລະບົດບາດ ຂອງພະແນກການ; ຄົ້ນຄວ້າ, ກໍານົດຈຸດສຸມພັດທະນາຊົນນະບົດ ໃນແຕ່ລະໄລຍະໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງແຂວງ ເປັນຕົ້ນແມ່ນຈຸດສຸມຈັດສັນພູມລໍາເນົາ, ຈຸດສຸມສ້າງບ້ານພັດທະນາ, ສ້າງບ້ານໃຫຍ່ກາຍເປັນຕົວເມືອງນ້ອຍ ໃນຊົນນະບົດ ແລະ ຈຸດສຸມອື່ນໆ ພ້ອມທັງຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ;

16. ຊຸກຍູ້, ສົ່ງເສີມ, ເອື້ອອໍານວຍຄວາມສະດວກ ໃຫ້ແກ່ການລົງທຶນຂອງຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ເປັນຂະບວນການແຂງແຮງ; ພົວພັນຮ່ວມມື, ຂົນຂວາຍຍາດແຍ່ງການຊ່ວຍ ເຫຼືອ ແລະ ການລົງທຶນ ຈາກພາຍໃນ, ຕ່າງປະເທດ ບົນພື້ນຖານກົດໝາຍ ເພື່ອເປັນກໍາລັງແຮງປະກອບສ່ວນເຂົ້າໃນການພັດທະນາວຽກງານກະສິກໍາ, ປ່າໄມ້, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ; ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການງົບປະມານຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ພາຍໃຕ້ຄວາມຮັບຜິດຊອບຂອງຕົນໃຫ້ຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍວາງອອກ ໃນແຕ່ລະໄລຍະ ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດໃຫ້ໄດ້ຜົນສໍາເລັດ ເປັນຢ່າງດີ;

17. ຄົ້ນຄວ້າ ແລະ ນໍາສະເໜີການກໍານົດຕໍາແໜ່ງງານໃຫ້ຄົບຖ້ວນ, ວາງແຜນກໍານົດ, ກໍ່ສ້າງ, ບໍາລຸງຍົກລະດັບພະນັກງານ, ຄຸ້ມຄອງ-ນໍາໃຊ້ ແລະ ປະຕິບັດນະໂຍບາຍຕ່າງໆ ໃຫ້ພະນັກງານ-ລັດຖະກອນ ຕາມກົດໝາຍ ແລະ ລະບຽບການ ທີ່ໄດ້ກໍານົດໄວ້;

18. ເກັບກໍາສະຖິຕິ ແລະ ສະໜອງຂໍ້ມູນຂ່າວສານດ້ານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ເພື່ອເປັນບ່ອນອີງໃນການວາງແຜນ, ການຈັດຕັ້ງປະຕິບັດໂຄງການ ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນບັນດາແຜນງານ, ແຜນການ ແລະ ໂຄງການ ທີ່ຈັດຕັ້ງປະຕິບັດຢູ່ທ້ອງຖິ່ນຂອງຕົນ ໃຫ້ມີປະສິດທິຜົນ;

19. ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ, ຍຸດທະສາດ, ແຜນງານ, ແຜນການ, ໂຄງການ ລົງທຶນຂອງລັດ ຫຼື ໂຄງການ ທຶນກູ້ຢືມ ແລະ ການຊ່ວຍເຫຼືອທາງການເພື່ອການພັດທະນາ, ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ໃນຂົງເຂດກະສິກໍາ ຕາມການແບ່ງຂັ້ນຄຸ້ມຄອງ; ກວດກາການທັບປ່ຽນດິນກະສິກໍາ, ດິນເຂດຊົນລະປະທານ ຕາມກົດໝາຍ ແລະ ລະບຽບການ; ຕ້ານ ແລະ ສະກັດກັ້ນ ກວດກາ ການລັກລອບຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້, ບຸກລຸກ, ທໍາລາຍ, ຊື້-ຂາຍ ຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້, ກວດກາ ກິດຈະການ ກ່ຽວກັບຊັບພະຍາກອນປ່າໄມ້, ໂຮງງານປຸງແຕ່ງໄມ້, ເຄື່ອງປ່າຂອງດົງ, ເຕົາຖ່ານ ແລະ ໂຮງງານທີ່ໃຊ້ໄມ້ເປັນພະລັງງານ ພ້ອມທັງດໍາເນີນຄະດີຕໍ່ຜູ້ລະເມີດກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນໍ້າ-ສັດປ່າ ແລະ ນິຕິກໍາ ທີ່ພົວພັນກັບການເຄື່ອນໄຫວຂອງໂຮງງານປຸງແຕ່ງໄມ້; ຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ, ແກ້ໄຂຄໍາຮ້ອງ, ຄໍາສະເໜີ ຂອງພົນລະເມືອງ ທີ່ຕິດພັນກັບຂະແໜງກະສິກໍາແລະ ປ່າໄມ້;

20. ສໍາຫຼວດ, ຈັດສັນ, ກໍານົດເຂດປູກໄມ້ ແລະ ເຄື່ອງປ່າຂອງດົງ ພ້ອມທັງຊຸກຍູ້ ແລະ ອໍານວຍຄວາມສະດວກໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນໃສ່ການປູກໄມ້ ແລະ ເຄື່ອງປ່າຂອງດົງເປັນສິນຄ້າ ແລະ ປົກປັກຮັກສາສິ່ງແວດລ້ອມ; ວາງແຜນການຄຸ້ມຄອງ, ປົກ

ປົກປັກຮັກສາ ແລະ ພັດທະນາ ແລະ ນຳໃຊ້ 3 ປະເພດປ່າ ແລະ ເນື້ອທີ່ປ່າໄມ້ໃນເຂດຄຸ້ມຄອງຂອງບ້ານ ຕາມການແບ່ງຂັ້ນຄຸ້ມຄອງ ພ້ອມທັງມີມາດຕະການປ້ອງກັນໄຟໄໝ້ລາມປ່າ ຢູ່ທ້ອງຖິ່ນຂອງຕົນ;

21. ຄຸ້ມຄອງ, ບໍລິຫານການເງິນ ແລະ ຊັບສິນຂອງພະແນກ ພ້ອມທັງຂື້ນແຜນການ, ງົບປະມານ ແລະ ສະຫຼຸບສັງລວມ ຕາມກົດໝາຍ ແລະ ລະບຽບການ;
22. ປະສານສົມທົບກັບຂະແໜງການຂັ້ນແຂວງ, ເມືອງ ໃນການຈັດຕັ້ງປະຕິບັດໜ້າທີ່, ພາລະບົດບາດ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງຄຳມ່ວນ ໃນແຕ່ລະໄລຍະ ຢ່າງເປັນລະບົບຕໍ່ເນື່ອງ;
23. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ, ແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ແຜນການ, ແຜນງານ, ໂຄງການ, ນິຕິກຳ ແລະ ລະບຽບການຕ່າງໆ ທີ່ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງແຂວງຄຳມ່ວນ ວາງອອກໃຫ້ມີປະສິດທິຜົນສູງ;
24. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງມອບໝາຍຂອງຂັ້ນເທິງ.

**ມາດຕາ 4 ຂອບເຂດສິດ**

ພະແນກກະສິກຳ ແລະ ປ່າໄມ້ ແຂວງ ມີສິດດັ່ງລຸ່ມນີ້:

1. ຄົ້ນຄວ້າ ແລະ ສະເໜີປັບປຸງກົງຈັກການຈັດຕັ້ງຂອງຕົນຕໍ່ອົງການປົກຄອງແຂວງ ໂດຍການປະສານສົມທົບ ແລະ ເອກະພາບ ກັບກະຊວງກະສິກຳ ແລະ ປ່າໄມ້, ກຳນົດຕຳແໜ່ງງານ, ບັນຈຸ, ສັບຊ້ອນ ແລະ ຈັດວາງບຸກຄະລາກອນ ໃນພະແນກກະສິກຳ ແລະ ປ່າໄມ້ ແຂວງ ຕາມການແບ່ງຂັ້ນຄຸ້ມຄອງ ທີ່ກົດໝາຍ ແລະ ລະບຽບການກຳນົດຕາມທິດກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິພາບ;
2. ຈັດຕັ້ງປະຕິບັດບັນດານິຕິກຳ, ຄຳແນະນຳ, ກຳນົດໝາຍເຕັກນິກ ແລະ ມາດຕະຖານ ທີ່ກະຊວງວາງອອກເພື່ອຄຸ້ມຄອງວຽກງານກະສິກຳ, ປ່າໄມ້, ການປຸງແຕ່ງກະສິກຳ-ປ່າໄມ້ ແລະ ວຽກງານພັດທະນາຊົນນະບົດຂອງແຂວງຄຳມ່ວນ; ຜັນຂະຫຍາຍຈັດຕັ້ງປະຕິບັດການຊີ້ນຳຂອງກະຊວງໃນດ້ານເຕັກນິກວິຊາການຕາມລະບົບກົນໄກຄຸ້ມຄອງສາຍຕັ້ງ, ແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງສິດໃນການຕົກລົງບັນຫາ; ເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ມາດຕະການຕ່າງໆທີ່ກ່ຽວຂ້ອງກັບພາລະບົດບາດ ຂອງຂະແໜງກະສິກຳ ແລະ ປ່າໄມ້; ຈັດກອງປະຊຸມ, ງານວາງສະແດງສິນຄ້າກະສິກຳ ແລະ ຕະຫຼາດນັດ, ຝຶກອົບຮົມ, ສຳມະນາວິຊາການ;
3. ອອກຄຳແນະນຳ, ແຈ້ງການ, ໜັງສືສະເໜີ ເຖິງພະແນກການອ້ອມຂ້າງ ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ໂຄງການ, ຫົວໜ່ວຍວິຊາການ ແລະ ຫົວໜ່ວຍການຜະລິດ, ຫົວໜ່ວຍທຸລະກິດ ກ່ຽວກັບວຽກງານກະສິກຳ, ປ່າໄມ້, ການປຸງແຕ່ງກະສິກຳ ແລະ ວຽກງານພັດທະນາຊົນນະບົດພາຍໃນແຂວງ;
4. ສະເໜີອົງການປົກຄອງແຂວງຄຳມ່ວນ ປັບປຸງ, ໂຈະການປະຕິບັດ, ລົບລ້າງ ຫຼື ຍົກເລີກນິຕິກຳ ຂອງພະແນກການອື່ນ ແລະ ອົງການປົກຄອງເມືອງທີ່ຂັດກັບກົດໝາຍ ແລະ ລະບຽບການຂອງຂະແໜງການຕົນ;
5. ຄົ້ນຄວ້າ, ປະກອບຄຳເຫັນ ກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດ ດ້ານກະສິກຳ ແລະ ປ່າໄມ້; ຢັ້ງຢືນບົດວິພາກເສດຖະກິດ-ເຕັກນິກ, ຢັ້ງຢືນແຜນນຳເຂົ້າ, ສົ່ງອອກ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງບົນພື້ນຖານກົດໝາຍ ແລະ ລະບຽບການແຕ່ລະໄລຍະ;
6. ກວດກາສະຖານທີ່ ແລະ ການດຳເນີນທຸລະກິດ ເພື່ອການຢັ້ງຢືນດ້ານຄຸນນະພາບ, ຄວາມປອດໄພສຳລັບການສະເໜີອະນຸຍາດສົ່ງອອກ, ນຳເຂົ້າ ແລະ ຂົນສົ່ງຜ່ານ ຜະລິດຕະພັນກະສິກຳ ແລະ ປ່າໄມ້, ບັນດາວັດຖຸອຸປະກອນ, ປັດໃຈການຜະລິດ ຕາມແຜນການທີ່ໄດ້ຮັບອະນຸມັດຈາກ ອົງການປົກຄອງ ແຂວງຄຳມ່ວນ ຫຼື ກະຊວງຕາມກົດໝາຍ ແລະ ລະບຽບການ; ຄຸ້ມຄອງ, ກວດກາ, ກັກກັນພືດ ແລະ ສັດຢູ່ດ່ານຊາຍແດນ ຕາມການມອບໝາຍສິດຈາກລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້;ຄຸ້ມຄອງກວດກາ, ກັກກັນ

ພືດ ແລະ ສັດຢູ່ດ່ານຊາຍແດນທ້ອງຖິ່ນຕາມການມອບໝາຍສິດຈາກ ເຈົ້າແຂວງຄຳມ່ວນ ພ້ອມທັງວາງມາດຕະການຕິດຕາມ ແລະ ສະກັດກັ້ນການແຜ່ລະບາດ ຂອງສັດຕູພືດ ແລະ ພະຍາດສັດໃຫ້ທັນເວລາ; ຂຶ້ນທະບຽນ, ຢັ້ງຢືນ ສວນປູກພືດ, ສວນໄມ້ປູກ, ຟາມລ້ຽງສັດ ແລະ ສັດນ້ຳຕາມການແບ່ງຂັ້ນຄຸ້ມຄອງ;

7. ຄົ້ນຄວ້າ, ວາງແຜນ ແລະ ນຳສະເໜີ ເຈົ້າແຂວງ ກ່ຽວກັບວຽກງານພັດທະນາຊົນນະບົດເພື່ອ ຊອກຫາຮູບແບບ ແລະ ວິທີການທີ່ເໝາະສົມໃນການຈັດສັນພູມລຳເນົາ, ການຝຶກອົບຮົມວິຊາຊີບ ແລະ ຈັດສັນອາຊີບຄົງທີ່ໃຫ້ປະຊາຊົນ ພາຍຫຼັງຢຸດຕິການຖາງປ່າເຮັດໄຮ່;
8. ຮຽກໂຮມພະນັກງານນຳພາ-ຄຸ້ມຄອງ ແລະ ນັກວິຊາການ ໃນຄວາມຮັບຜິດຊອບຂອງຕົນ, ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານສ່ອງແສງວຽກງານເປັນແຕ່ລະໄລຍະ; ຫັນພະນັກງານລົງປະຈຳຢູ່ສູນ, ສະຖານີ ແລະ ກອງຄຸ້ມຄອງ 03 ປະເພດປ່າ ຢູ່ພາກສະໜາມ ຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບການທີ່ກ່ຽວຂ້ອງ;
9. ຄຸ້ມຄອງ, ບຳລຸງກໍ່ສ້າງ, ນຳໃຊ້, ຈັດວາງ, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ຕາມການແບ່ງຂັ້ນຄຸ້ມຄອງ;
10. ຄຸ້ມຄອງ, ແບ່ງປັນ ແລະ ມອບໝາຍແຜນການ, ງົບປະມານ, ພາຫະນະ ແລະ ອຸປະກອນທີ່ໄດ້ຮັບອະນຸມັດຈາກອົງການປົກຄອງ ແຂວງ, ກະຊວງ ໃຫ້ບັນດາຂະແໜງການ, ກອງ, ສູນ, ໂຄງການອ້ອມຂ້າງ ພະແນກ ແລະ ຫົວໜ່ວຍວິຊາການທີ່ຂຶ້ນກັບຕົນ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານຕາມກົດໝາຍ ແລະ ລະບຽບການ ໃຫ້ມີປະສິດທິຜົນສູງ;
11. ດຳເນີນການກວດກາຜົນການຈັດຕັ້ງປະຕິບັດແຜນງານ, ແຜນການ ແລະ ໂຄງການພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຂອງແຂວງຄຳມ່ວນ ເພື່ອສະຫຼຸບສັງລວມ, ວິໄຈ ແລະ ປະເມີນຜົນໃຫ້ເຫັນດ້ານດີ, ດ້ານອ່ອນ ແລະ ຄົງຄ້າງ ແລ້ວວາງມາດຕະການແກ້ໄຂໃນຕໍ່ໜ້າພ້ອມທັງລາຍງານ ກະຊວງ ແລະ ອົງການປົກຄອງ ແຂວງ;
12. ປະຕິບັດສິດອື່ນຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ພະແນກກະສິກຳ ແລະ ປ່າໄມ້ ແຂວງຄຳມ່ວນ ມີໂຄງປະກອບກົງຈັກ ດັ່ງລຸ່ມນີ້:

1. ຂະແໜງບໍລິຫານ, ແຜນການ ແລະ ຈັດຕັ້ງ;
2. ຂະແໜງກວດກາລັດ;
3. ຂະແໜງປູກຝັງ;
4. ຂະແໜງລ້ຽງສັດ ແລະ ການປະມົງ;
5. ຂະແໜງປ່າໄມ້;
6. ຂະແໜງຊົນລະປະທານ;
7. ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ;
8. ຂະແໜງພັດທະນາຊົນນະບົດ;
9. ກອງກວດກາປ່າໄມ້;
10. ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ;
11. ກອງຄຸ້ມຄອງອຸທິຍານແຫ່ງຊາດຫີນໜາມໜໍ່;

12. ສູນພັດທະນາກະສິກຳເຊບັ້ງໄຟ;

ມາດຕາ 6 ໂຄງປະກອບບຸກຄະລາກອນ

ພະແນກກະສິກຳ ແລະ ປ່າໄມ້ ແຂວງຄຳມ່ວນ ມີໂຄງປະກອບບຸກຄະລາກອນ ດັ່ງລຸ່ມນີ້:

1. ຫົວໜ້າພະແນກ ຈຳນວນ 01 ທ່ານ ຮັບຜິດຊອບຕໍ່ເຈົ້າແຂວງ, ຮອງເຈົ້າແຂວງ ຜູ້ຊີ້ນຳຂົງເຂດວຽກງານ ແລະ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໃນການຄຸ້ມຄອງຂະແໜງກະສິກຳ ແລະ ປ່າໄມ້ ຊຶ່ງມີສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້;

   ໃນເວລາຫົວໜ້າພະແນກຕິດຂັດຕ້ອງມອບສິດ ໃຫ້ຮອງຫົວໜ້າພະແນກທ່ານໃດໜຶ່ງ ຮັກສາການແທນ;

2. ຮອງຫົວໜ້າພະແນກຈຳນວນໜຶ່ງ ຊ່ວຍຫົວໜ້າພະແນກຊີ້ນຳວຽກງານໃດໜຶ່ງຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າພະແນກ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ຂອງວຽກງານທີ່ຕົນຊີ້ນຳ;

   ຮອງຫົວໜ້າພະແນກຜູ້ຮັກສາການແທນຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າພະແນກ ພາຍຫຼັງປະຈຳການ;

3. ຫົວໜ້າຂະແໜງ, ຫົວໜ້າກອງ, ຮອງຫົວໜ້າຂະແໜງ, ຮອງຫົວໜ້າກອງ, ແລະ ລັດຖະກອນວິຊາການຈຳນວນໜຶ່ງຕາມການກຳນົດຕຳແໜ່ງງານ;

   ເຊິ່ງການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍຫຼືປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້.

## ໝວດທີ 4
## ໜ້າທີ່ ຂອງແຕ່ລະຂະແໜງການ

**ມາດຕາ 7 ໜ້າທີ່ ຂອງຂະແໜງບໍລິຫານ, ແຜນການ ແລະ ຈັດຕັ້ງ.**

ຂະແໜງບໍລິຫານ, ແຜນການ ແລະ ຈັດຕັ້ງ ມີໜ້າທີ່ ດັ່ງລຸ່ມນີ້:

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳອື່ນຂອງຂັ້ນເທິງ ແລະ ນິຕິກຳຕ່າງໆ ຂອງກະຊວງກະສິກຳ ແລະ ປ່າໄມ້;
2. ຜັນຂະຫຍາຍ, ເຊື່ອມຊຶມແນວທາງ, ນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
3. ເປັນເສນາທິການໃຫ້ແກ່ຄະນະພັກ, ຄະນະພະແນກ, ເປັນໃຈກາງປະສານງານປົ່ນອ້ອມ ລະຫວ່າງຂະແໜງການ, ກອງ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ແລະ ພະແນກການຕ່າງໆທີ່ກ່ຽວຂ້ອງ;
4. ເກັບກຳສະຖິຕິ ແລະ ຊີວະປະຫວັດຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ທີ່ຂຶ້ນກັບ ພະແນກກະສິກຳ ແລະ ປ່າໄມ້ ແລະ ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ເພື່ອເປັນຖານຂໍ້ມູນບຸກຄະລາກອນ ເພື່ອຕອບສະໜອງໃຫ້ແກ່ການວາງແຜນຄຸ້ມຄອງ-ນຳໃຊ້ ພະນັກງານ;
5. ຄົ້ນຄວ້າ, ນຳສະເໜີ ການປັບປຸງກົງຈັກການຈັດຕັ້ງ, ພ້ອມທັງເປັນເຈົ້າການໃນການກຳນົດຕຳແໜ່ງງານຂອງຫ້ອງ ການ, ຂະແໜງ, ກອງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ສະຖານີ ໃຫ້ແທດເໝາະກັບໜ້າວຽກຕົວຈິງ;
6. ຄົ້ນຄວ້າ, ນຳສະເໜີ ແຜນກໍ່ສ້າງພະນັກງານ ແລະ ພັດທະນາກົງຈັກການຈັດຕັ້ງ;
7. ກວດກາ, ຕິດຕາມ ແລະ ປະເມີນຜົນ ການປະຕິບັດໜ້າທີ່ວຽກງານຂອງສະມາຊິກພັກ-ພະນັກງານລັດຖະກອນ ໃນຂອບເຂດຄວາມຮັບຜິດຊອບຂອງພະແນກ;
8. ຄົ້ນຄວ້າ, ນຳສະເໜີ ການປະຕິບັດນະໂຍບາຍ, ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ ທີ່ກະທຳຜິດ

ຕໍ່ລະບຽບ ແລະ ກົດໝາຍ ທີ່ກຳນົດໄວ້;

9. ຊຸກຍູ້, ຕິດຕາມ, ຕ້ານ ແລະ ສະກັດກັ້ນການກະທຳທຸກຮູບແບບ ທີ່ໃຊ້ຄວາມຮຸນແຮງ ຕໍ່ແມ່ຍິງ - ເດັກ ແລະ ການ ນຳໃຊ້ແຮງງານເດັກ ໃນທົ່ວຂະແໜງການກະສິກຳ ແລະ ປ່າໄມ້;

10. ຮັບຜິດຊອບວຽກງານຕໍ່ກັບພັນທະຂອງສົນທິສັນຍາສາກົນທີ່ກ່ຽວຂ້ອງ, ເຊື່ອມໂຍງ ແລະ ຜັນຂະຫຍາຍຍຸດທະສາດຄວາມສະເໝີພາບຍິງ-ຊາຍ ເຂົ້າໃນແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;

11. ເປັນເຈົ້າການຄຸ້ມຄອງ, ບໍລິຫານການເງິນ-ການບັນຊີ, ລາຍຮັບ, ລາຍຈ່າຍ ຕ່າງໆຂອງພະແນກ;

12. ຄຸ້ມຄອງ, ບໍລິການ ແລະ ອຳນວຍຄວາມສະດວກ ໃນການນຳໃຊ້ລະບົບທັນສະໄໝ, ການບໍລິຫານ ອົງການ; ຄຸ້ມຄອງ, ຕິດຕາມ ເອກະສານຂາເຂົ້າ-ຂາອອກ, ການສາລະບັນ, ການຈໍລະຈອນ ແລະ ການ ສຳເນົາເອກະສານ; ຄຸ້ມຄອງບໍລິຫານ, ບໍລິການ, ຈັດຕັ້ງປະຕິບັດກົນໄກປະຕູດຽວ, ວຽກງານ ເລຂານຸການ, ພິທີການ, ຮັບແຂກພາຍໃນ ແລະ ຕ່າງປະເທດ ຂອງພະແນກ;

13. ຕິດຕາມ, ກວດກາ, ຮັກສາ, ຄຸ້ມຄອງພາຫະນະ, ວັດຖຸສິ່ງຂອງ, ຊັບສິນ, ຊັບສິນບົດລວມ ທີ່ຢູ່ໃນ ຄວາມຮັບຜິດ ຊອບ ຂອງພະແນກກະສິກຳ ແລະ ປ່າໄມ້, ລວມທັງ ຫ້ອງການກະສິກຳ ແລະ ປ່າໄມ້ 10 ເມືອງອ້ອມຂ້າງແຂວງ;

14. ເປັນໃຈກາງ ໃນວຽກງານປ້ອງກັນຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ ຂອງ ພະແນກ, ການປ້ອງກັນສຳນັກງານຫ້ອງການ ແລະ ຄວາມປອດໄພໃນຖານຂໍ້ມູນ;

15. ຄົ້ນຄວ້າ, ສ້າງ, ຄຸ້ມຄອງ, ພັດທະນາ ແລະ ປັບປຸງ ວຽກງານຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາ ຊົນນະບົດ; ສັງລວມຜົນສຳເລັດຂອງພະແນກແຕ່ລະໄລຍະ, ບົດຮຽນຕົວແບບການຜະລິດທີ່ດີ, ຜົນສຳ ເລັດຂອງການຄົ້ນຄວ້າທົດລອງ, ນະວັດຕະກຳ, ກະສິກຳທັນສະໄໝ, ພູມປັນຍາຊາວບ້ານ, ໂຄສະນາ ເຜີຍແຜ່ອອກສູ່ສັງຄົມດ້ວຍຫຼາຍຮູບແບບ ພ້ອມທັງຈັດສຳເນົາໃຫ້ເປັນລະບົບ ແລະ ມີຄວາມປອດໄພ;

16. ຮັບຜິດຊອບຄຸ້ມຄອງງົບປະມານການລົງທຶນ ຂອງພະແນກໃນງົບປະມານການລົງທຶນຂອງລັດ, ກອງ ທຶນພັດທະນາ, ທຶນຊ່ວຍເຫຼືອລ້າ, ທຶນກູ້ຢືມ, ການລົງທຶນຂອງຜູ້ປະກອບການ ແລະ ທຶນອື່ນໆ;

17. ຜັນຂະຫຍາຍ ການຈັດຕັ້ງປະຕິບັດລະບຽບການໃນການຄຸ້ມຄອງວຽກງານແຜນການ, ແຜນງົບປະມານ ການລົງທຶນຂອງລັດ, ການລົງທຶນເອກະຊົນ ພາຍໃນ ແລະ ຕ່າງປະເທດ, ການຮ່ວມມືກັບສາກົນ, ເຊື່ອມໂຍງເສດຖະກິດພາກພື້ນ ແລະ ສາກົນ ໃນການລົງທຶນທຸລະກິດໂຄງການ ແລະ ວຽກງານສະຖິຕິ ກະສິກຳ ແລະ ປ່າໄມ້ ໃຫ້ມີປະສິດ ທິພາບ;

18. ປະສານງານວຽກງານການຮ່ວມມື, ການຊ່ວຍເຫຼືອ ແລະ ການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ໃນການຄຸ້ມຄອງທຶນໂຄງການ, ທຶນຊ່ວຍເຫຼືອລ້າ, ທຶນກູ້ຢືມຂອງສາກົນ, ເຊື່ອມໂຍງເສດຖະກິດພາກ ພື້ນ ແລະ ສາກົນ, ທຸລະກິດໂຄງການ, ວຽກງານສະຖິຕິກະສິກຳ ແລະ ປ່າໄມ້ ແລະ ຈາກແຫຼ່ງທຶນອື່ນ ບົນພື້ນຖານສ້າງເປັນໂຄງການຄຸ້ມຄອງຕາມກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້;

19. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງ ປະຕິບັດ ແຜນການ ແລະ ແຜນງົບປະມານ ການລົງທຶນຂອງລັດ, ໂຄງການຊ່ວຍເຫຼືອລ້າ ແລະ ກູ້ຢືມ, ໂຄງການລົງທຶນຂອງຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ໃນຂະແໜງການກະສິກຳ ແລະ ປ່າໄມ້;

20. ຄົ້ນຄວ້າ, ສ້າງແຜນການເຄື່ອນໄຫວປະຈຳເດືອນ,  ປະຈຳ 3 ເດືອນ, 6 ເດືອນ, ປະຈຳປີ ຮ່ວມກັບຄະ ນະພັກ ແລະ ຄະນະພະແນກ ພ້ອມທັງປະສານກັບບັນດາຂະແໜງການທີ່ກ່ຽວຂ້ອງຂອງພະແນກ ແລະ ເມືອງ ເພື່ອອຳນວຍຄວາມສະດວກໃນການເຄື່ອນໄຫວວຽກງານ ໃຫ້ມີຜົນສຳເລັດ;

21. ເປັນໃຈກາງໃນການສະຫຼຸບ, ສັງລວມຜົນການຈັດຕັ້ງປະຕິບັດວຽກງານກະສິກຳ ແລະ ປ່າໄມ້ ປະຈຳ

ອາທິດ, ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ລາຍງານໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

22. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 8 ໜ້າທີ່ຂອງຂະແໜງກວດກາລັດ**

ຂະແໜງກວດກາລັດ ມີໜ້າທີ່ດັ່ງລຸ່ມນີ້:

1. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ລະບຽບ, ກົດໝາຍ ກ່ຽວກັບວຽກງານກວດກາ ທີ່ກ່ຽວພັນກັບພະແນກກະສິກຳ ແລະ ປ່າໄມ້ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງຕິດຕາມ, ກວດກາ ການປະຕິບັດນະໂຍບາຍພະນັກງານ-ລັດຖະກອນ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງພະແນກ ແລະ ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ;
2. ເປັນເຈົ້າການໃນການຕ້ານ ແລະ ການສະກັດກັ້ນການສໍ້ລາດບັງຫຼວງ ແລະ ປະກົດການຫຍໍ້ທໍ້ຕ່າງໆ ຂອງພະນັກງານ-ລັດຖະກອນຂອງຕົນ;
3. ຕິດຕາມ, ກວດກາ ການແຈ້ງຊັບສິນ, ໜີ້ສິນ, ລາຍຮັບ-ລາຍຈ່າຍ ຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ໃນຂອບເຂດຄວາມຮັບຜິດຊອບຂອງພະແນກ;
4. ດຳເນີນການສືບສວນ-ສອບສວນ ຄະດີການສໍ້ລາດບັງຫຼວງ, ສະຫຼຸບ ແລະ ປະກອບສຳນວນ ສົ່ງໃຫ້ຄະນະພັກ, ຄະນະນຳພະແນກ ພິຈາລະນາ;
5. ຄົ້ນຄວ້າ ແລະ ປະກອບຄຳເຫັນ ຕໍ່ຄຳສະເໜີຂອງພົນລະເມືອງ ກ່ຽວກັບການກະທຳ ຫຼື ການຕົກລົງບັນຫາໃດໜຶ່ງ ທີ່ລະເມີດຕໍ່ ລະບຽບ, ກົດໝາຍ ຂອງການຈັດຕັ້ງ ຫຼື ພະນັກງານ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ຄົ້ນຄວ້າພິຈາລະນາຄຳສະເໜີ ຂອງພົນລະເມືອງ ທີ່ຂະແໜງການກະສິກຳ ແລະ ປ່າໄມ້ ຕາມສາຍຕັ້ງໄດ້ແກ້ໄຂໄປແລ້ວ ແຕ່ພົນລະເມືອງຜູ້ນັ້ນເຫັນວ່າບໍ່ເໝາະສົມ;
7. ພົວພັນ ແລະ ປະສານສົມທົບກັບຂະແໜງການ, ກອງ ແລະ ສູນ ອ້ອມຂ້າງພະແນກ ແລະ ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ ເພື່ອດຳເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາ ຕາມພາລະບົດບາດຂອງຕົນ;
8. ສະເໜີວິທີການແກ້ໄຂຜົນຂອງການກວດກາລັດ ໃຫ້ຫົວໜ້າພະແນກ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ຂັ້ນເທິງ;
9. ຕິດຕາມ, ກວດກາການປະຕິບັດນະໂຍບາຍຍ້ອງຍໍ ແລະ ວິໄນຕໍ່ສະມາຊິກພັກ, ພະນັກງານ-ລັດຖະກອນຂອງຕົນ;
10. ປະສານສົມທົບກັບປະທານກວດກາພັກ-ລັດ ຂອງເມືອງ ດຳເນີນການກວດກາ ການຈັດຕັ້ງປະຕິບັດພາລະບົດບາດ, ແຜນການ, ໂຄງການຂອງບັນດາຂະແໜງການ, ກອງ, ສູນ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ ຕາມການຕົກລົງເຫັນດີຂອງຫົວໜ້າພະແນກ ແລະ ປະທານກວດກາພັກ-ລັດ ແຂວງ;
11. ຊຸກຍູ້ ຕິດຕາມ, ກວດກາ ໜ່ວຍງານກວດກາລັດ ຂອງບັນດາຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ ໃຫ້ເຄື່ອນໄຫວຕາມພາລະບົດບາດ;
12. ຂຶ້ນແຜນ, ຄຸ້ມຄອງນຳໃຊ້ງົບປະມານ, ພາຫະນະ ແລະ ຊັບສົມບັດ ຮັບໃຊ້ຕ່າງໆໃຫ້ແກ່ການເຄື່ອນໄຫວຂອງຂະແໜງກວດກາລັດ ພ້ອມທັງສະຫຼຸບ, ສັງລວມ ຜົນຂອງການຈັດຕັ້ງປະຕິບັດວຽກງານປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ເພື່ອລາຍງານຂັ້ນເທິງ ຢ່າງເປັນປົກກະຕິ;
13. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 9 ໜ້າທີ່ ຂອງຂະແໜງປູກຝັງ**

ຂະແໜງປູກຝັງມີໜ້າທີ່ ດັ່ງລຸ່ມນີ້:

1. ປະຕິບັດກົດໝາຍ, ດຳລັດນິຕິກຳອື່ນຂອງຂັ້ນເທິງ ແລະ ນິຕິກຳຕ່າງໆ ຂອງອົງການປົກຄອງແຂວງ ແລະ ກະຊວງກະສິກຳ ແລະ ປ່າໄມ້;
2. ຜັນຂະຫຍາຍນະໂຍບາຍກະສິກຳສະອາດ ແລະ ຍຸດທະສາດ ພັດທະນາການປູກຝັງ ໃຫ້ເປັນແຜນງານ ໂຄງການ ແລະ ກິດຈະກຳອັນລະອຽດ ຢູ່ພາຍໃນແຂວງ . ພ້ອມທັງກຳນົດເຂດ ແລະ ຈຸດສຸມໃນການຫັນປ່ຽນເຂົ້າສູ່ລະບົບການຜະລິດກະສິກຳສະອາດ;
3. ໂຄສະນາ ເຜີຍແຜ່ ບັນດາເງື່ອນໄຂ, ຂໍ້ກຳນົດ, ນິຕິກຳ ແລະ ຄູ່ມືຕ່າງໆວຽກງານປຸງແຕ່ງ ວຽກງານພືດ ແລະ ກົນຈັກກະສິກຳ;
4. ກວດກາ ແລະ ຢັ້ງຢືນສຸຂະນາໄມພືດ ສຳລັບການສົ່ງອອກ, ສົ່ງອອກຕໍ່, ນຳເຂົ້າ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມອື່ນໆ ຢູ່ດ່ານກັກກັນພືດສາກົນ,ຄຸ້ມຄອງ, ຈັດຕັ້ງປະຕິບັດວຽກງານກັກກັນພືດ ປະຈຳດ່ານກັກກັນພືດ ປະຈຳດ່ານກັກກັນພືດທ້ອງຖິ່ນ ແລະ ດ່ານປະເພນີ;
5. ສຳຫຼວດ, ເກັບກຳຂໍ້ມູນ, ກວດກາ, ຕິດຕາມ, ເຝົ້າລະວັງ, ພະຍາກອນ, ປ້ອງກັນ ແລະ ກຳຈັດ, ນຳສະເໜີພະແນກກະສິກຳ ແລະ ປ່າໄມ້ ອອກແຈ້ງການເຕືອນ, ບົດແນະນຳດ້ານເຕັກນິກ - ການປ້ອງກັນ ແລະ ຄວບຄຸມສັດຕູພືດ ໃນແຕ່ລະຊ່ວງລະດູການ, ສະຫຼຸບ ແລະ ລາຍງານ ກ່ຽວກັບສັດຕູພືດ, ສັດຕູພືດຄວບຄຸມ ແລະ ທຸລະກິດສຸຂານາໄມພືດ ສະຖານີກັກກັນພືດ ໃນທ້ອງຖິ່ນຂອງຕົນ;
6. ກວດກາ, ທົດສອບ ແລະ ວິໄຈສານເຄມີຕົກຄ້າງ, ຢາປາບສັດຕູພືດ, ຝຸ່ນເຄມີ, ຝຸ່ນອິນຊີ, ຝຸ່ນຊີວະພາບ, ແນວພັນພືດກ່ອນການຂຶ້ນການຂຶ້ນທະບຽນ, ການນຳເຂົ້າ ການຈຳໜ່າຍ ແລະ ການນຳໃຊ້ຢູ່ໃນທ້ອງຖິ່ນຂອງຕົນ;
7. ຂື້ນແຜນ, ຄຸ້ມຄອງການນຳໃຊ້ງົບປະມານ, ພາຫະນະ ແລະ ຊັບສິນບັດຕ່າງໆ ພ້ອມທັງກໍ່ສ້າງ - ບຳລຸງພະນັກງານ - ລັດຖະກອນ, ຕິດຕາມກວດກາ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການຕ່າງໆທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ເພື່ອລາຍງານໃຫ້ຂັ້ນເທິງຊາບແຕ່ລະໄລຍະ;
8. ສ້າງ ແລະ ພັດທະນາຕາໜ່າງປ້ອງກັນພືດ ແຕ່ຂັ້ນແຂວງ, ເມືອງ ແລະ ບ້ານ ໂດຍສະເພາະແມ່ນການສ້າງໝໍພືດປະຈຳບ້ານ ເພື່ອຕິດຕາມເຝົ້າລະວັງ, ປ້ອງກັນ, ຄວບຄຸມ, ກຳຈັດສັດຕູພືດ ຫຼື ຫາວິທີການແກ້ໄຂ ທາງດ້ານວິຊາການທີ່ເໝາະສົມ, ໃນກໍລະນີເກີດການຕິດແປດ ຫຼືແຜ່ລະບາດຂອງສັດຕູພືດຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
9. ປະສານສົມທົບກັບຜູ້ຜະລິດ, ຜູ້ປະກອບການ ແລະ ຫົວໜ່ວຍທຸລະກິດ ພາຍໃນແຂວງ ໃນການປະຕິບັດມາດຕະຖານ ແລະ ການຂໍການຢັ້ງຢືນ ຕາມມາດຕະຖານກະສິກຳສະອາດ ໂດຍສະເພາະແມ່ນກະສິກຳອິນຊີ ແລະ ກະສິກຳທີ່ດີ ແລະ ມາດຕະຖານອັນອື່ນທີ່ກ່ຽວຂ້ອງ ໃຫ້ແກ່ຜູ້ປະກອບການພາຍໃນ ຂອບເຂດທີ່ຕົນຮັບຜິດຊອບ;
10. ຄົ້ນຄ້ວາ ແລະ ສະເໜີພະແນກ ອອກ, ໂຈະ ຫຼື ຖອນໃບອະນຸຍາດນຳເຂົ້າ ປັດໃຈການຜະລິດ ເຊັ່ນ: ແນວພັນ, ຝຸ່ນ, ຢາປາບສັດຕູພືດ, ພ້ອມທັງກວດກາ, ຕິດຕາມ ການນຳເຂົ້າ, ການຈຳໜ່າຍ ແລະ ການບໍລິການ, ບຳລຸງ ແລະ ຍົກລະດັບບຸກຄະລາກອນຂັ້ນເມືອງ ກ່ຽວກັບວຽກງານຄຸ້ມຄອງ, ກວດກາ ແລະ ນຳໃຊ້ຢາປາບສັດຕູພືດ;
11. ຄົ້ນຄ້ວາ ແລະ ສະເໜີ ພະແນກກະສິກຳ ແລະ ປ່າໄມ້ ແຕ່ງຕັ້ງ ຫຼື ຍົກຍ້າຍ ເຈົ້າໜ້າທີ່ດ່ານກັກກັນພືດທ້ອງຖິ່ນ ແລະ ດ່ານປະເພນີ, ເຈົ້າໜ້າທີ່ກວດກາຢາປາບສັດຕູພືດຝຸ່ນ ແລະ ແນວພັນ;
12. ຄົ້ນຄ້ວາ, ປະກອບຄຳເຫັນ ທາງດ້ານວິຊາການ ໃນການອອກ ໃບອະນຸຍາດ ດຳເນີນກິດຈະການ ດ້ານປູກຝັງ, ຂໍຈົດ ແລະ ຂຶ້ນທະບຽນໂຮງງານ ປຸງແຕ່ງພືດ, ກົນຈັກ ແລະ ເຄື່ອງມືຮັບໃຊ້ການຜະລິດ ກະສິກຳ, ການອະນຸຍາດສ້າງໂຮງງານປຸງແຕ່ງພືດ, ການຂໍຈົດທະບຽນ ຢາປາບສັດຕູພືດ, ຝຸ່ນ ແລະ ແນວພັນພືດ ໃຫ້

ແກ່ບັນດາຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການ, ການອະນຸຍາດນຳເຂົ້າ, ຈຳໜ່າຍກົນຈັກ, ອາໄລກົນຈັກ ແລະ ເຄື່ອງມືຮັບໃຊ້ການ ຜະລິດພືດ ໃຫ້ຖືກຕ້ອງຕາມລະບຽບຫຼັກການ;

13. ຄຸ້ມຄອງ, ຕິດຕາມ, ກວດກາ, ອອກໃບທະບຽນພື້ນທີ່ປູກ (ພືດ, ໄມ້ໃຫ້ໝາກ) ແລະ ສະຖານທີ່ຫຸ້ມຫໍ່, ບັນຈຸ ເພື່ອໃຫ້ສອດຄ່ອງກັບເງື່ອນໄຂການນຳເຂົ້າ ຂອງປະເທດຄູ່ຄ້າ;
14. ຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້ສົ່ງເສີມ ແລະ ການພັດທະນາໂຮງສີເຂົ້າ, ໂຮງງານປຸງແຕ່ງມັນຕົ້ນ, ໂຮງງານປຸງແຕ່ງອ້ອຍ, ໂຮງງານປຸງແຕ່ງພືດ, ຜະລິດຕະພັນພືດອື່ນໆ, ຄຸ້ມຄອງ ແລະ ເກັບກຳສະຖິຕິກົນຈັກ ແລະ ເຄື່ອງມືຮັບໃຊ້ການປູກຝັງ, ກຳນົດແຜນການຜະລິດ, ການປຸງແຕ່ງ, ການຕະຫຼາດ, ຄຸ້ມຄອງ, ກວດກາ, ມາດຕະຖານ ໂຮງງານປຸງແຕ່ງທີ່ດີ, ສຸຂານາໄມ ແລະ ຄວາມປອດໄພໃນການປຸງແຕ່ງ, ການຫຸ້ມຫໍ່ ແລະ ອື່ນໆ ຢູ່ໃນໂຮງງານປຸງແຕ່ງພືດ;
15. ເກັບກຳ, ສັງລວມຂໍ້ມູນບັນດາໂຮງງານປຸງແຕ່ງຜະລິດຕະພັນຈາກພືດ ແລະ ຜະລິດພືດ, ໂຮງສີເຂົ້າ, ຜູ້ປະກອບການ ກ່ຽວກັບວຽກງານປຸງແຕ່ງພືດ ແລະ ການນຳໃຊ້ເຄື່ອງມື ກົນຈັກກະສິກຳ;
16. ສຶກສາ ແລະ ສ້າງສວນຕົວແບບການຂະຫຍາຍພັນໄມ້ໃຫ້ໝາກ, ພືດຜັກກິນຫົວ, ກິນໃບ, ໃນລະບົບ ກະສິກຳທີ່ດີ, ກະສິກຳອິນຊີ ພ້ອມທັງດຳເນີນການສາທິດດ້ານການປູກ ຮ່ວມກັບຊາວກະສິກອນ, ຜູ້ປະກອບການ ເພື່ອຂະຫຍາຍຜົນການຄົ້ນຄ້ວາ, ທົດລອງ ແລະ ຜົນການປະຕິບັດທີ່ດີເດັ່ນ, ຕາມທ່າແຮງຕົວຈິງ ແນໃສ່ຕອບສະໜອງ, ເອື້ອອຳນວຍໃຫ້ການຮຽນຮູ້ ແລະ ການແລກປ່ຽນ ບົດຮຽນຂອງຊາວກະສິກອນ ຜູ້ປະກອບການ ໃນການຍົກຜະລິດຕະພາບ ແລະ ຄຸນນະພາບຂອງ ຜົນຜະລິດກະສິກຳ;
17. ຊຸກຍູ້ ແລະ ສົ່ງເສີມການນຳໃຊ້ຜົນສຳເລັດໃໝ່ທາງດ້ານວິທະຍາສາດ - ວິທະຍາການ ເພື່ອຍົກສະມັດຕະພາບໃນການປູກຝັງ ຕາມທິດພັດທະນາກະສິກຳສະອາດ, ປະສົມປະສານ ແລະ ຕິດພັນສະນິດ ແໜ້ນການຈັດຕັ້ງເປັນກຸ່ມຮຽນຮູ້, ກຸ່ມຜະລິດ ຫຼື ສະຫະກອນຕາມເງື່ອນໄຂ ແລະ ທ່າແຮງ;
18. ເປັນເຈົ້າການ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດງານວາງສະແດງຕະຫຼາດນັດສິນຄ້າກະສິກຳ, ງານພົບປະແລກປ່ຽນຄຳຄິດເຫັນລະຫວ່າງລັດ, ຜູ້ປະກອບການ, ຜູ້ຜະລິດ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ ຕາມເງື່ອນໄຂ, ທ່າແຮງດ້ວຍການປະສານສົມທົບກັບພາກສ່ວນ ທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນຂອງຕົນ.
19. ຊຸກຍູ້ສົ່ງເສີມ ການສ້າງຄອບຄົວຕົວແບບ, ກຸ່ມຕົວແບບ ແລະ ວິຊາການກັບທີ່ໃນດ້ານເຕັກນິກການຜະລິດ ແລະ ການປຸງແຕ່ງກະສິກຳ ພ້ອມດຽວກັນນັ້ນ ສະເໜີໃຫ້ພະແນກກະສິກຳ ແລະ ປ່າໄມ້ ອອກໃບຢັ້ງຢືນ ດ້ານວິຊາການ ໃຫ້ວິຊາການກັບທີ່ ຜູ້ມີຄວາມສຳນານງານສະເພາະດ້ານ ໃນລະດັບທີ່ແນ່ນອນ;
20. ສົ່ງເສີມການຜະລິດ ດ້ວຍການນຳໃຊ້ແນວພັນເຂົ້າລຸ້ນ 3 (ແນວພັນສົ່ງເສີມ) ແນວພັນດີຂອງພືດ ໃນຂອບເຂດທົ່ວແຂວງ ໂດຍອີງໃສ່ເງື່ອນໄຂ ແລະ ທ່າແຮງຕົວຈິງຂອງທ້ອງຖິ່ນ ເພື່ອຕອບສະໜອງ ໃຫ້ແກ່ຂະບວນການຜະລິດສະບຽງອາຫານ ແລະ ສິນຄ້າ ໃຫ້ສາມາດບັນລຸຕາມຄາດໝາຍແຜນການ ທີ່ວາງໄວ້;
21. ຊຸກຍູ້, ສົ່ງເສີມ ແລະ ຄຸ້ມຄອງການຜະລິດແນວພັນເຂົ້າລຸ້ນສາມ (ແນວພັນສົ່ງເສີມ) ຂອງບັນດາ ຫົວໜ່ວຍທຸລະກິດ, ບໍລິສັດ, ໂຄງການຮ່ວມມືສູນ ແລະ ກຸ່ມຜະລິດກະສິກຳ ໃຫ້ສອດຄ່ອງຕາມລະບຽບການ ແລະ ເຕັກນິກການຜະລິດ ເພື່ອຕອບສະໜອງໃຫ້ການ ຜະລິດເປັນສິນຄ້າ;
22. ສະຫຼຸບ, ສັງລວມ ຜົນການຈັດຕັ້ງປະຕິບັດວຽກງານ ປະຈຳອາທິດ, ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ, ແຜນຍຸດທະສາດ 5 ປີ, ເພື່ອລາຍງານຂັ້ນເທິງຢ່າງເປັນປົກກະຕິ;
23. ປະຕິບັດຕາມໜ້າທີ່ອື່ນໆ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ

**ມາດຕາ 10 ໜ້າທີ່ ຂອງຂະແໜງລ້ຽງສັດ ແລະ ການປະມົງ**

ຂະແໜງລ້ຽງສັດ ແລະ ການປະມົງ ມີໜ້າທີ່ດັ່ງນີ້

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳອື່ນຂອງຂັ້ນເທິງ ແລະ ນິຕິກຳຕ່າງໆຂອງກະຊວງກະສິກຳ ແລະ ປ່າໄມ້;
2. ຄົ້ນຄວ້າ, ເຊື່ອມຊຶມ ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານລ້ຽງສັດ, ສັດຕະວະແພດ ແລະ ການປະມົງ, ຊຸກຍູ້ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວາລະແຫ່ງຊາດຂອງຂະແໜງການ ໂດຍສະເພາະ ສົ່ງເສີມການຜະລິດສັດ, ປາ ແລະ ໄຂ່ ຢູ່ພາຍໃນແຂວງ ເພື່ອສ້າງຖານລາຍຮັບທີ່ແຂງແຮງ ດ້ວຍການຫັນໃຫ້ເປັນແຜນງານ, ໂຄງການ, ພ້ອມທັງຈັດຕັ້ງປະຕິບັດໂຄສະນາເຜີຍແຜ່ ແລະ ເຂົ້າຮ່ວມກວດກາປະເມີນຜົນການຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ;
3. ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດ ບັນດາກົດໝາຍ, ນິຕິກຳລຸ່ມກົດໝາຍ, ນະໂຍບາຍ, ແຜນຍຸດທະສາດ, ແຜນງານ ແລະ ໂຄງການລ້ຽງສັດ ແລະ ສັດນ້ຳເປັນສິນຄ້າ, ໂຄງການປຸງແຕ່ງຜະລິດຕະພັນສັດໃນແຕ່ລະຊະນິດສັດ ທີ່ຢູ່ພາຍໃນແຂວງຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;
4. ຊຸກຍູ້ສົ່ງເສີມການຜະລິດທາດຊີ້ນໃຫ້ພຽງພໍ ເພື່ອຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະໂພຊະນາການສູງ, ປອດໄພ ເພື່ອຊົມໃຊ້ພາຍໃນ ທົດແທນການນຳເຂົ້າ, ຊຸກຍູ້ການລ້ຽງສັດ, ການປະມົງເປັນສິນຄ້າ ແບບເປັນຟາມ ຮູບແບບທີ່ທັນສະໄໝ ໂດຍມີການກຳນົດເຂດລ້ຽງຕິດພັນກັບການປຸງແຕ່ງ ແລະ ການຕະຫຼາດ ຕາມທ່າແຮງຂອງແຂວງ, ຊຸກຍູ້ການພັດທະນາວິສາຫະກິດ, ຟາມ, ຄອບຄົວຕົວແບບ ໃນການຜະລິດສິນຄ້າສັດ, ຊີວະພາບ, ສະອາດ, ມີຄຸນນະພາບ ໄດ້ມາດຕະຖານ ການຜະລິດສິນຄ້າ ເພື່ອສົ່ງອອກຕ່າງປະເທດ ໂດຍສອດຄ່ອງກັບມາດຕະ ຖານສຸຂານາໄມຂອງປະເທດຄູ່ຄ້າ;
5. ຊຸກຍູ້, ສົ່ງເສີມ ໃນການປະຕິບັດ ມາດຕະຖານການລ້ຽງສັດທີ່ດີ (GAHP), ຢັ້ງຢືນ, ຂຶ້ນທະບຽນບັນດາຟາມລ້ຽງ ສັດ-ສັດນ້ຳ, ໂຮງງານອາຫານສັດ, ໂຮງປະສົມອາຫານສັດ, ໂຮງຂ້າສັດ, ບ່ອນຂ້າສັດຍ່ອຍ, ໂຮງປຸງແຕ່ງ ແລະ ສະ ຖານທີ່ເກັບຮັກສາຜະລິດຕະພັນສັດ-ສັດນ້ຳ, ຮ້ານຂາຍຢາປິ່ນປົວສັດ, ກົນຈັກ ແລະ ເຄື່ອງມືອຸປະກອນ ຮັບໃຊ້ການລ້ຽງສັດ ແລະ ການປະມົງ. ພັດທະນາ ການຂົນສົ່ງ ແລະ ຕະຫຼາດສິນຄ້າກ່ຽວກັບສັດ-ສັດນ້ຳ, ຄຸ້ມຄອງ, ກວດກາ ມາດຕະຖານການປຸງແຕ່ງທີ່ດີ, ສຸຂານາໄມ ແລະ ຄວາມປອດໄພໃນການປຸງແຕ່ງ, ການຫຸ້ມຫໍ່ ແລະ ອື່ນໆ ຢູ່ໃນໂຮງ ງານປຸງແຕ່ງ;
6. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານກັກກັນສັດ, ການຄວບຄຸມການເຄື່ອນຍ້າຍຜະລິດຕະພັນສິນຄ້າກ່ຽວກັບສັດ, ຜະລິດຕະພັນສິນຄ້າກ່ຽວກັບການປະມົງ ແລະ ຜະລິດຕະພັນສິນຄ້າກ່ຽວກັບການສັດຕະວະແພດໃນການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ລວມທັງການຢັ້ງຢືນດ້ານສຸຂະພາບສັດ ແລະ ສຸຂານາໄມ ຕາມການມອບໝາຍຂອງພະແນກກະສິກຳ ແລະ ປ່າໄມ້, ກົມລ້ຽງສັດ ແລະ ການປະມົງ;
7. ຄົ້ນຄວ້າ ແລະ ສະເໜີຂັ້ນເທິງຂອງຕົນ ເພື່ອປັບປຸງບັນດານິຕິກຳ, ກົນໄກ, ລະບຽບການ, ຂັ້ນຂອດ ແລະ ສິ່ງກີດ ຂວາງທີ່ເປັນອຸປະສັກ ແກ່ການລົງທຶນ, ການດຳເນີນທຸລະກິດ ຂອງບັນດາ ບໍລິສັດ, ຜູ້ປະກອບການ, ຫົວໜ່ວຍການຜະລິດ, ຟາມ, ຄອບຄົວຕົວແບບ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ເປັນເອກະພາບ, ຄົ້ນຄວ້າ ແລະ ປະກອບຄຳເຫັນ, ໃຫ້ການປຶກສາ, ເອື້ອອຳນວຍຄວາມສະດວກ ໃຫ້ແກ່ການລົງທຶນ ແລະ ການດຳເນີນທຸລະກິດ ກ່ຽວກັບການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ;
8. ພັດທະນາ, ວິເຄາະ-ວິໄຈ, ສ້າງຖານຂໍ້ມູນສະຖິຕິສັດ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບທີ່ດິນລ້ຽງສັດ ແລະ ແຫຼ່ງທີ່ຢູ່ອາໄສຂອງສັດນ້ຳ, ຂໍ້ມູນການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ປະຈຳເດືອນ 3 ເດືອນ, 6 ເດືອນ, 1 ປີ, 5 ປີ ຢ່າງເປັນລະບົບໂດຍການນຳໃຊ້ລະບົບເຕັກໂນໂລຊີ ທີ່ທັນສະໄໝ ໃຫ້ສາມາດເຊື່ອມໂຍງກັບລະບົບສະຖິຕິ ຂອງກົມລ້ຽງສັດ ແລະ ການປະມົງ;
9. ຊຸກຍູ້ ສົ່ງເສີມ ສະໜັບສະໜູນ ການພັດທະນາ ການນຳໃຊ້ແນວພັນສັດ-ສັດນ້ຳ, ການຜະລິດອາຫານສັດ ແລະການພັດທະນາກ່ຽວກັບທົ່ງຫຍ້າລ້ຽງສັດ, ບໍລິການດ້ານການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ລວມທັງສົ່ງເສີມວຽກງານສະຫວັດດີການສັດ;

10. ຄົ້ນຄວ້າ ແລະ ສະເໜີ ເພື່ອຂຶ້ນທະບຽນອາຫານສັດ, ຢາສັດຕະວະແພດ, ຜະລິດຕະພັນການສັດຕະວະແພດ, ວັດຖຸດິບສໍາລັບຜະລິດອາຫານສັດ, ແນວພັນ, ນໍ້າເຊື້ອ, ໄຂ່ອ່ອນຂອງສັດ - ສັດນໍ້າ, ພືດອາຫານ ສັດ, ພືດນໍ້າ, ຂະຫຍາຍຕາໜ່າງການນໍາໃຊ້ຢາສັດຕະວະແພດ ພ້ອມທັງການສະໜອງອຸປະກອນການ ສັດຕະວະແພດ, ພັດທະນາລະບົບການສືບຍ້ອນຫຼັງປະຫວັດຂອງສັດ, ຜະລິດຕະພັນສັດ - ສັດນໍ້າ ດໍາເນີນການຂຶ້ນທະບຽນພັນສັດ;

11. ເປັນເຈົ້າການໃນການຈັດຕັ້ງປະຕິບັດ ລະບົບເຝົ້າລະວັງ, ປ້ອງກັນ ແລະ ຄວບຄຸມພະຍາດສັດ - ສັດນໍ້າ, ສືບຄົ້ນຫາພະຍາດ ແລະ ເກັບຕົວຢ່າງ ເພື່ອການວິໄຈ ບົ່ງມະຕິພະຍາດສັດ - ສັດນໍ້າ, ວິໄຈຄຸນນະພາບ - ຄວາມປອດໄພ ຂອງອາຫານສັດ, ພືດອາຫານສັດ, ແຫຼ່ງວັດຖຸດິບອາຫານສັດ, ຢາສັດຕະວະແພດ, ຄຸນນະພາບນໍ້າສໍາລັບການລ້ຽງສັດ-ສັດນໍ້າ ແລະ ຜະລິດຕະພັນສັດ-ສັດນໍ້າ ລວມທັງການພັດທະນາລະບົບຄວາມປອດໄພທາງດ້ານຊີວະພາບຕິດຕາມ ແລະ ຈໍາກັດເຊື້ອທີ່ຕ້ານຕໍ່ຢາຕ້ານເຊື້ອຈຸລະຊີບ;

12. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການງົບປະມານຂອງລັດ ແລະ ໂຄງການຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ຕາມການອະນຸມັດຂອງແຂວງ ແລະ ກະຊວງກະສິກໍາ ແລະ ປ່າໄມ້ໃນແຕ່ລະໄລຍະໃຫ້ຖືກຕ້ອງ, ສອດຄ່ອງ ກັບກົດໝາຍ ແລະ ລະບຽບການ;

13. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານພັດທະນາ ດ່ານກວດກາສັດຕະວະແພດ, ຈຸດກວດກາຂອງເຂດປອດພະຍາດ ແລະ ເຂດຄວບຄຸມການລະບາດຂອງພະຍາດ ເພື່ອຄວບຄຸມການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ,ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສິນຄ້າປະມົງ ຕາມການມອບໝາຍຂອງຂັ້ນເທິງ;

14. ເປັນເຈົ້າການຄົ້ນຄວ້າ ນໍາສະເໜີຕໍ່ຂັ້ນເທິງ ກ່ຽວກັບການປະກາດ ແລະ ຍົກເລີກ ເຂດລະບາດພະຍາດສັດ;

15. ຄຸ້ມຄອງ, ຕິດຕາມ, ກວດກາດ້ານວິຊາການ, ບັນດາທຸລະກິດ ກ່ຽວກັບການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ, ການຂ້າ ແລະ ປຸງແຕ່ງຜະລິດຕະພັນສັດ-ສັດນໍ້າ, ການກວດກາອະນາໄມຊີ້ນ, ການຄວບຄຸມຄຸນນະ ພາບ ແລະ ຄວາມປອດໄພຂອງຜະລິດຕະພັນສັດ-ສັດນໍ້າ, ອາຫານສັດ, ຢາສັດຕະວະແພດ ຢູ່ພາຍໃນແຂວງຕົນ;

16. ປັບປຸງ ແລະ ພັດທະນາ ໂຄງລ່າງພື້ນຖານ, ວັດຖຸເຕັກນິກ ແລະ ຊັບພະຍາກອນມະນຸດ ເພື່ອອໍານວຍຄວາມ ສະດວກໃຫ້ແກ່ການປະຕິບັດວຽກງານ ໃນຂົງເຂດ ການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ, ຊຸກຍູ້ສະໜັບສະໜູນດ້ານເຕັກນິກ ແລະ ວິຊາການ ໃຫ້ແກ່ບັນດາຂຸ່ນ, ສະຖານີ ຢູ່ຂັ້ນແຂວງ, ເມືອງ ແລະ ສະມາຄົມ, ກຸ່ມການຜະລິດ ແລະ ສະຫະກອນ ລວມທັງການສ້າງກອງທຶນພັດທະນາດ້ານການລ້ຽງສັດ-ສັດນໍ້າ ແລະ ການຮັກສາສຸຂະ ພາບສັດໃຫ້ມີຄວາມເຂັ້ມແຂງ;

17. ພົວພັນ, ຮ່ວມມື ແລະ ປະສານງານ ກັບຂະແໜງການອື່ນຢູ່ພາຍໃນ, ພາຍນອກແຂວງ ແລະ ອົງການຄຸ້ມຄອງທີ່ກ່ຽວຂ້ອງ ໃນການແລກປ່ຽນຂໍ້ມູນຂ່າວສານ, ສົ່ງເສີມການລົງທຶນ, ການຊ່ວຍເຫຼືອດ້ານວິຊາການ ເພື່ອພັດທະນາວຽກງານລ້ຽງສັດ, ສັດຕະວະແພດ ແລະ ການປະມົງພາຍໃນແຂວງໃຫ້ເຂັ້ມແຂງ;

18. ສະຫຼຸບ, ສັງລວມ ຜົນຂອງການຈັດຕັ້ງປະຕິບັດວຽກງານປະຈໍາອາທິດ, ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈໍາປີ ເພື່ອລາຍງານຂັ້ນເທິງຢ່າງເປັນປົກກະຕິ

19. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ;

**ມາດຕາ 11 ໜ້າທີ່ ຂອງຂະແໜງປ່າໄມ້**

ຂະແໜງປ່າໄມ້ ມີໜ້າທີ່ ດັ່ງນີ້

1. ເປັນເຈົ້າການ ໃນການປະຕິບັດກົດໝາຍ, ລະບຽບການ ແລະ ນິຕິກໍາຕ່າງໆ ກ່ຽວກັບວຽກງານປ່າໄມ້;
2. ຜັນຂະຫຍາຍ ແລະ ເຜີຍແຜ່ຍຸດທະສາດ, ນະໂຍບາຍ ຄຸ້ມຄອງປ່າໄມ້ແບບຍືນນານ, ສົນທິສັນຍາຕ່າງໆ ທີ່

ສປປ ລາວ ເປັນພາຄືອອກເປັນແຜນງານ, ໂຄງການ ແລະ ແຜນການດຳເນີນງານອັນລະອຽດ;

3. ເປັນເຈົ້າການໃນການປະຕິບັດ ແລະ ປະເມີນແຜນຍຸດທະສາດປ່າໄມ້ໃນລະດັບແຂວງ;

4. ສຳຫຼວດ, ວາງແຜນ, ຈັດສັນ, ຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ ແລະ ພັດທະນາປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ມີຄວາມຍືນຍົງ ລວມທັງເຂດປ່າໄມ້ຂັ້ນບ້ານ, ເຂດປູກໄມ້, ຟື້ນຟູປ່າ ແລະ ກຳນົດເຂດອະນຸລັກສະເພາະຊີວະນາໆພັນ, ສັດນ້ຳ-ສັດປ່າ ພ້ອມທັງຄຸ້ມຄອງ ການຊື້-ຂາຍ ຊະນິດພັນ ສັດນ້ຳ-ສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ ແລະ ໃກ້ຈະສູນພັນ ຕາມສົນທິສັນຍາສາກົນ (CITES);

5. ຊຸກຍູ້, ຕິດຕາມ ແລະ ຄຸ້ມຄອງ ການຂຸດຄົ້ນໄມ້ປູກ, ໄມ້ທຳມະຊາດ ລວມທັງພາຫະນະ, ວັດຖຸ ອຸປະກອນ, ເຄື່ອງມືຂຸດຄົ້ນໄມ້, ຄຸ້ມຄອງ ແລະ ອະນຸຍາດນຳໃຊ້ຄ້ອນກາຕີໄມ້, ອະນຸຍາດຂຸດຄົ້ນໄມ້ ແລະ ເຄື່ອນຍ້າຍ ໄມ້ທ່ອນ, ໄມ້ແປຮູບ, ໄມ້ເຄິ່ງສຳເລັດຮູບ, ໄມ້ສຳເລັດຮູບ, ຕໍໄມ້, ໄມ້ລົ້ມເຂົ້າ-ລົ້ມ ອອກ, ໄມ້ປະດັບ, ໄມ້ຄ້ຳແບບ, ໄມ້ຫຼັກຮົ້ວ, ໄມ້ຟືນ, ຖ່ານທຸກປະເພດ, ໄມ້ເປັນພະລັງງານ ແລະ ເຄື່ອງ ປ່າ ຂອງດົງລວມທັງ ສັດນ້ຳ - ສັດປ່າ;

6. ຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາໂຮງງານປຸງແຕ່ງໄມ້, ໂຮງເລື່ອຍ, ໂຮງງານ ໄມ້ຝານ, ໄມ້ບົດ, ໂຮງງານ ເຟີນີເຈີ້, ຮ້ານຂາຍໄມ້ ແລະ ເຄື່ອງເຟີນີເຈີໄມ້, ໂຮງງານຜະລິດເຈ້ຍໂດຍນຳໃຊ້ໄມ້ ເປັນວັດຖຸດິບ, ໂຮງງານ ເຟີນີເຈີ້ ແບບຄອບຄົວ, ໂຮງງານປຸງແຕ່ງຢາງພາລາ, ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ແລະ ໂຮງງານ ຜະລິດຖ່ານ ພາຍໃນແຂວງ ໃຫ້ເປັນລະບົບ ຕ່ອງໂສ້ການຜະລິດ, ການປຸງແຕ່ງ ແລະ ການຕະຫຼາດ ທັງ ພາຍໃນ ແລະ ຕ່າງປະເທດ;

7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງ ແລະ ຈັດຕັ້ງປະຕິບັດແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ແລະ ເຄື່ອງປ່າຂອງດົງ ພ້ອມທັງສ້າງ ແລະ ຝຶກອົບຮົມ ດ້ານວິຊາການໃຫ້ປ່າໄມ້ບ້ານ ຕິດພັນກັບການ ຈັດສັນ ອາຊີບ ແລະ ຢຸດຕິການຖາງປ່າເຮັດໄຮ່;

8. ກຳນົດເນື້ອທີ່, ສ້າງແຜນ, ຊຸກຍູ້ ແລະ ສົ່ງເສີມ, ການປູກໄມ້, ການສ້າງສວນກ້າເບ້ຍໄມ້ ແລະ ຟື້ນຟູປ່າປະ ຈຳປີ, ຄຽງຄູ່ກັບ ການກວດກາລາດຕະເວນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອປ້ອງກັນ ແລະ ຕ້ານ ສະກັດກັ້ນໄຟໄໝ້ລາມປ່າ ແລະ ພະຍາດບົ້ງແມງ ລວມທັງການຂຶ້ນທະບຽນ ແຫຼ່ງແກ່ນພັນໄມ້ ສວນປູກໄມ້, ເຂດຟື້ນຟູປ່າ, ເຄື່ອງປ່າຂອງດົງ, ຮ້ານຂາຍເບ້ຍໄມ້, ຟາມລ້ຽງສັດປ່າ, ສວນສັດປ່າ ແລະ ການຢັ້ງຢືນໄມ້ປູກ, ພັນພືດປ່າ ແລະ ພັນສັດປ່າ ຕາມສົນທິສັນຍາສາກົນ;

9. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຢັ້ງຢືນ ບົດວິພາກເສດຖະກິດ-ເຕັກນິກ, ການຂຶ້ນທະບຽນ, ການຕໍ່ທະບຽນ ແລະ ໃບອະນຸຍາດດຳເນີນກິດຈະການດ້ານປ່າໄມ້ ເຊັ່ນ: ໂຮງງານອຸດສະຫະກຳປຸງແຕ່ງໄມ້, ໂຮງງານເຟີນີ ເຈີ, ໂຮງງານໄມ້ ຝານ, ໄມ້ບົດ, ຮ້ານຂາຍໄມ້, ເຕົາເຜົາຖ່ານ, ໂຮງງານປຸງແຕ່ງຢາງພາລາ ແລະ ເຄື່ອງປ່າ ຂອງດົງອື່ນໆ ທີ່ນຳໃຊ້ໄມ້ເປັນພະລັງງານ;

10. ເປັນເຈົ້າການ ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ການປູກໄມ້ ແລະ ຟື້ນຟູປ່າໃຫ້ຜູ້ປະກອບການ ທີ່ໄດ້ດຳເນີນ ກິດຈະການລົງທຶນໃນຂະແໜງການປ່າໄມ້ໃຫ້ມີສວນປູກໄມ້ເປັນຂອງຕົນເອງ ເພື່ອເປັນວັດຖຸດິບ ປ້ອນ ໂຮງງານ ແລະ ຫຼຸດຜ່ອນການນຳໃຊ້ໄມ້ຈາກປ່າທຳມະຊາດ;

11. ເຂົ້າຮ່ວມ ການຈັດຕັ້ງປະຕິບັດ ວຽກງານ, ໂຄງການ ແລະ ກິດຈະກຳກ່ຽວກັບການປະຕິບັດນະໂຍບາຍ ດ້ານສັງຄົມ ແລະ ສິ່ງແວດລ້ອມຕິດພັນກັບການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການ ທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເຊື່ອມໂຊມ;

12. ເປັນເຈົ້າການ ປະສານສົມທົບກັບພາກສ່ວນ ທີ່ກ່ຽວຂ້ອງ ຄົ້ນຄວ້າ ການສ້າງຕັ້ງກຸ່ມຢາງພາລາ, ກຸ່ມປູກໄມ້ ອຸດສາຫະ ກຳ ພ້ອມທັງ ຮ່າງນິຕິກຳກ່ຽວກັບການຄຸ້ມຄອງ;

13. ຄົ້ນຄວ້າ, ປະກອບຄຳເຫັນ ນຳສະເໜີ ຂັ້ນເທິງ ກ່ຽວກັບການຫັນປ່ຽນທີ່ດິນປ່າໄມ້ ໄປເປັນທີ່ດິນ ປະເພດ ອື່ນ ພ້ອມທັງຄຸ້ມຄອງ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນການລົງທຶນໃນຂະແໜງການປ່າໄມ້;

14. ຄົ້ນຄວ້າ, ປະກອບຄໍາເຫັນ ສະເໜີ ຂັ້ນເທິງ ພິຈາລະນາອະນຸມັດ, ໂຈະ, ຍົກເລີກ ບັນດາໂຮງງານປຸງແຕ່ງໄມ້, ເຄື່ອງປ່າຂອງດົງ, ກິດຈະການລົງທຶນດ້ານປ່າໄມ້ ແລະ ດິນປ່າໄມ້ ທີ່ເຄື່ອນໄຫວ ບໍ່ຖືກຕ້ອງຕາມລະບຽບກົດໝາຍ;

15. ຄຸ້ມຄອງ, ປົກປັກຮັກສາ ຊັບສິນຂອງລັດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອນໍາໃຊ້ເຂົ້າໃນ ວຽກງານຄຸ້ມຄອງປ່າໄມ້, ພ້ອມທັງ ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ໄດ້ກໍານົດໄວ້;

16. ສະຫຼຸບ, ສັງລວມຜົນການຈັດຕັ້ງປະຕິບັດວຽກງານປ່າໄມ້ ປະຈໍາເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈໍາປີ ເພື່ອລາຍງານໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

17. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 12 ໜ້າທີ່ ຂອງຂະແໜງຊົນລະປະທານ**

ຂະແໜງຊົນລະປະທານ ມີໜ້າທີ່ດັ່ງນີ້:

1. ປະຕິບັດລັດຖະທໍາມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ສະພາແຂວງ, ລັດຖະບັນຍັດຂອງປະທານປະເທດ, ດໍາລັດ, ມະຕິ, ນິຕິກໍາຂອງລັດຖະບານ, ນາຍົກລັດຖະມົນຕີ, ລັດຖະມົນຕີ ແລະ ເຈົ້າແຂວງຄໍາມ່ວນ;

2. ຈັດຕັ້ງຜັນຂະຫຍາຍນະໂຍບາຍຂອງພັກ, ດໍາລັດ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ແລະ ນິຕິກໍາຕ່າງໆຂອງຂັ້ນເທິງວາງອອກ ມາເປັນແຜນງານ, ແຜນການ, ໂຄງການຂອງຕົນ ຕາມການແບ່ງຂັ້ນຄຸ້ມຄອງ;

3. ພັດທະນາຊົນລະປະທານ ແລະ ການລະບາຍ ຫັນໄປສູ່ການຄຸ້ມຄອງແບບມອບ-ໂອນ ຢ່າງຂາດຕົວ ແລະ ຫັນໄປສູ່ລະບົບຊົນລະກະເສດທີ່ທັນສະໄໝເທື່ອລະກ້າວ;

4. ຂື້ນແຜນງົບປະມານ ການສຶກສາ, ການສໍາຫຼວດ-ອອກແບບ, ກໍ່ສ້າງ, ສ້ອມແປງ ແລະ ຕິດຕາມກວດກາ , ຊຸກຍູ້ການນໍາໃຊ້ນໍ້າຊົນລະປະທານ ປະຈໍາປີ ຫຼື ແຜນສຸກເສີນທີ່ໄດ້ຮັບຜົນກະທົບຈາກໄພພິບັດໃຫ້ທ່ວງທັນກັບເວລາ;

5. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການສຶກສາ, ການສໍາຫຼວດ-ອອກແບບ, ການກໍ່ສ້າງຊົນລະປະ ທານ ແລະ ການລະບາຍ, ໂຄງການກໍ່ສ້າງຊົນລະປະທານ ໃຫ້ໄດ້ຕາມມາດຕະຖານເຕັກນິກ ພ້ອມທັງເກັບກໍາ, ວິ ໄຈ, ສ້າງຖານຂໍ້ມູນ ເພື່ອພັດທະນາໂຄງການຊົນລະປະທານ, ການລະບາຍ ເພື່ອຮັບປະກັນ ການສະໜອງນໍ້າໃຫ້ເນື້ອທີ່ການຜະລິດກະສິກໍາຢ່າງທົ່ວເຖິງ ແລະ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ໃນການປັບປຸງລາຄາຫົວໜ່ວຍການກໍ່ສ້າງຊົນລະປະທານ;

6. ຕິດຕາມ ແລະ ຊຸກຍູ້ ໜ່ວຍງານຊົນລະປະທານຂັ້ນເມືອງ, ສູນສົ່ງເສີມກະສິກໍາ ຂອງແຂວງ, ເມືອງ, ກຸ່ມບ້ານພັດທະນາ ແລະ ເຂດຈຸດສຸມ ເພື່ອຈັດຕັ້ງປະຕິບັດການຄຸ້ມຄອງ, ຈັດສັນ, ບໍລິຫານ ແລະ ເກັບຄ່ານໍ້າ ພ້ອມທັງເກັບກໍາ ແລະ ສະໜອງຂໍ້ມູນຂ່າວສານດ້ານຊົນລະປະທານຮັບໃຊ້ໃຫ້ແກ່ ການກໍ່ສ້າງ, ຟື້ນຟູ ແລະ ສ້ອມແປງ ໂຄງການຊົນລະປະທານ ໃຫ້ສອດຄ່ອງກັບສະພາບ ຈຸດພິເສດ ແລະ ທ່າແຮງຂອງແຕ່ລະທ້ອງຖິ່ນ;

7. ຄຸ້ມຄອງລະບົບຊົນລະປະທານ ໃຫ້ມີປະສິດທິຜົນສູງ ພ້ອມທັງໃຫ້ການແນະນໍາ, ຝຶກອົບຮົມດ້ານວິຊາການ ແກ່ກຸ່ມນໍາໃຊ້ນໍ້າໃນການນໍາໃຊ້ນໍ້າຊົນລະປະທານ, ສ້າງບຸກຄະລາກອນກັບທີ່ຢ່າງເປັນເຈົ້າການ ແລະ ມີປະສິດທິຜົນ ພ້ອມທັງກຽມຄວາມພ້ອມໃນການເຂົ້າຮ່ວມຂະບວນການຕ້ານແລ້ງ, ຕ້ານຖ້ວມຂັ້ນສຸກເສີນຢ່າງເປັນເຈົ້າການ;

8. ຄຸ້ມຄອງການສ້າງຕັ້ງກອງທຶນ ຢູ່ໃນໂຄງການຊົນລະປະທານໃຫ້ເຂັ້ມແຂງ ເຊັ່ນ: ກຸ່ມຜູ້ຊົມໃຊ້ນໍ້າຊົນລະປະທານ, ກຸ່ມຜະລິດ, ສະມາຄົມ ຜູ້ປະກອບການ ແລະ ສະຫະກອນ;

9. ຄຸ້ມຄອງ ແລະ ນໍາໃຊ້ ຊັບສິນຂອງລັດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຢ່າງເປັນລະບົບ ແລະ ມີ

ຄວາມໂປ່ງໃສ ສາມາດກວດສອບໄດ້;

10. ຄົ້ນຄວ້າ, ສັງລວມ ບັນດາເອກກະສານດ້ານເຕັກນິກ, ເງື່ອນໄຂ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ອອກອະນຸຍາດ, ສືບຕໍ່, ໂຈະ ຫຼື ຖອນໃບອະນຸຍາດ ດຳເນີນທຸລະກິດກ່ຽວກັບກິດຈະການຊົນລະປະທານ ນຳສະເໜີຕໍ່ພະແນກກະສິກຳ ແລະ ປ່າໄມ້ ເພື່ອອະນຸຍາດຕາມກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້;

11. ໃຫ້ຄຳປຶກສາ ແລະ ຄຸ້ມຄອງກິດຈະການໂຄງການຊົນລະປະທານ, ການສຶກສາຄວາມເປັນໄປໄດ້, ສຳຫຼວດ - ອອກແບບລະອຽດ ແລະ ກໍ່ສ້າງໂຄງການ ຂະໜາດກາງ 100 ເຮັກຕາຫາ 1,000 ເຮັກຕາ ແລະ ຂະໜາດນ້ອຍ 100 ເຮັກຕາຫາ 10 ເຮັກຕາ;

12. ສະຫຼຸບ, ສັງລວມຜົນການຈັດຕັ້ງປະຕິບັດວຽກງານຊົນລະປະທານປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ເພື່ອລາຍງານໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

13. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 13 ໜ້າທີ່ ຂອງຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ**

ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ມີໜ້າທີ່ດັ່ງນີ້:

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳອື່ນໆ ຂອງຂັ້ນເທິງວາງອອກ ແລະ ນິຕິກຳຕ່າງໆ ກ່ຽວກັບວຽກງານ ຄຸ້ມຄອງແລະ ພັດທະນາທີ່ດິນກະສິກຳ;
2. ຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ ແລະ ລັດ, ແຜນຍຸດທະສາດ ຂອງຂະແໜງກະສິກຳ ແລະ ປ່າໄມ້ ມາເປັນແຜນງານ ແລະ ໂຄງການສະເພາະຂອງຕົນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
3. ເປັນເຈົ້າການ ຄົ້ນຄວ້ານຳສະເໜີ, ສ້າງ, ປັບປຸງ ນິຕິກຳໃຕ້ກົດໝາຍ ກ່ຽວກັບການຄຸ້ມຄອງນຳໃຊ້ທີ່ດິນກະສິກຳ ເພື່ອຄຸ້ມຄອງທີ່ດິນກະສິກຳ ບໍ່ໃຫ້ຫັນປ່ຽນໄປເປັນທີ່ດິນປະເພດອື່ນ, ພ້ອມທັງຈັດຕັ້ງ ການໂຄສະນາ, ເຜີຍແຜ່ນິຕິກຳ ອອກສູ່ສັງຄົມຢ່າງກວ້າງຂວາງ ແລະ ທົ່ວເຖິງລົງສູ່ທ້ອງຖິ່ນ;
4. ເປັນເຈົ້າການ ໃນການຈັດບຸລິມະສິດ ສຳຫຼວດ, ປະເມີນຄຸນນະພາບ ແລະ ຄວາມເໝາະສົມຂອງດິນກະສິກຳ ຕໍ່ການປູກພືດຊະນິດຕ່າງໆ, ເພື່ອກຳນົດແບ່ງເຂດການຜະລິດ (ເຂດປູກພືດ - ເຂດລ້ຽງສັດ) ຢູ່ໃນແຕ່ລະເມືອງ ຕາມແລວທາງເສດຖະກິດ ເພື່ອຮັບໃຊ້ໃນການລົງທຶນ ແລະ ວາງແຜນການຊຸກຍູ້ ສົ່ງເສີມການຜະລິດພາຍໃນ ທົດແທນການນຳເຂົ້າ ແລະ ການຜະລິດເພື່ອເປັນສິນຄ້າສົ່ງອອກ;
5. ເປັນເຈົ້າການປະສານສົມທົບ ກຳນົດແບ່ງເຂດທີ່ດິນກະສິກຳພ້ອມວາງແຜນນຳໃຊ້ທີ່ດິນກະສິກຳ ແລະ ປົກຫຼັກໝາຍເຂດດິນ ທີ່ຕ້ອງສະຫງວນໄວ້ ເພື່ອການຜະລິດກະສິກຳ ແລະ ອອກໃບຢັ້ງຢືນການພັດທະນາດິນກະສິກຳ;
6. ເປັນເຈົ້າການ ເກັບກຳຂໍ້ມູນ ແລະ ສ້າງຖານຂໍ້ມູນ ທີ່ດິນກະສິກຳ ເພື່ອຕິດຕາມ, ກວດກາ, ປະເມີນຜົນກ່ຽວກັບລະບຽບການຄຸ້ມຄອງ, ການນຳໃຊ້, ການປົກປັກຮັກສາ, ການບູລະນະ ແລະ ປັບປຸງດິນ ເພື່ອແນໃສ່ເຮັດໃຫ້ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ມີປະສິດທິພາບ ແລະ ຍືນຍົງ;
7. ເປັນເຈົ້າການປະສານສົມທົບ ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານຜະລິດຝຸ່ນຊີວະພາບ, ຝຸ່ນອົງຄະທາດ, ໂຮງງານຝຸ່ນວິທະຍາສາດແລະ ຮ້ານຈຳໜ່າຍຝຸ່ນ ໃຫ້ຮັບປະກັນ, ສາມາດສະໜອງການຜະລິດພາຍໃນແຂວງໄດ້ພຽງພໍ; ພ້ອມກັນນັ້ນ ເປັນເຈົ້າການປະສານສົມທົບ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງການສະໜອງຝຸ່ນພາຍໃນ, ການອອກ, ໂຈະ ຫຼື ຖອນໃບອະນຸຍາດ ດຳເນີນທຸລະກິດ ກ່ຽວກັບໂຮງງານຜະລິດ ແລະ ຮ້ານຈຳໜ່າຍຝຸ່ນ;

໘. ປະສານສົມທົບ ສາທິດຮູບແບບ ການນຳໃຊ້ທີ່ດິນກະສິກຳ, ການນຳໃຊ້ຝຸ່ນຕ່າງໆ ໃຫ້ຖືກຕ້ອງກັບສະພາບຂອງດິນ ຢູ່ໃນແຕ່ລະເຂດການຜະລິດ, ກວດກາ, ຕິດຕາມການນຳໃຊ້ຝຸ່ນ;

໙. ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ, ໃຫ້ບໍລິການ ວິໄຈດິນ, ຝຸ່ນ, ພືດ ແລະ ນ້ຳ ໃຫ້ພາກສ່ວນຕ່າງໆ ທັງພາກລັດ, ຜູ້ປະກອບການ ແລະ ຊາວກະສິກອນ;

10. ເປັນເຈົ້າການປະສານສົມທົບເຂົ້າຮ່ວມ ເກັບກຳຂໍ້ມູນ, ຕິດຕາມ, ກວດກາການນຳໃຊ້, ການເຊົ່າ, ສຳປະທານ ການນຳໃຊ້ທີ່ດິນກະສິກຳ, ປະກອບຄຳເຫັນ - ເອກະສານທາງດ້ານວິຊາການ ເພື່ອນຳສະເໜີຕໍ່ຄະນະຄຸ້ມຄອງການລົງ ທຶນຂອງແຂວງ ໃນການອະນຸມັດໂຄງການລົງທຶນຢູ່ພາຍໃນແຂວງ;

11. ເປັນເຈົ້າການປະສານສົມທົບ ຄຸ້ມຄອງ, ກວດກາ, ຕິດຕາມ ການຫັນປ່ຽນທີ່ດິນກະສິກຳໄປສູ່ເປົ້າໝາຍອື່ນ; ປະກອບຄຳເຫັນ - ເອກະສານທາງດ້ານວິຊາການ ເພື່ອສະເໜີຕໍ່ ສະພາປະຊາຊົນແຂວງຮັບຮອງ ແລະ ເຈົ້າແຂວງເພື່ອອອກຂໍ້ຕົກລົງຫັນປ່ຽນທີ່ດິນກະສິກຳ ໄປເປັນ ທີ່ດິນປະເພດອື່ນ;

12. ເປັນເຈົ້າການປະສານສົມທົບ ຄຸ້ມຄອງ, ຕິດຕາມ, ກວດກາ, ໃຫ້ການບໍລິການ ຕໍ່ການຜະລິດຝຸ່ນ ແລະ ດິນປູກ ຂອງໂຮງງານ, ຜູ້ປະກອບການ ແລະ ກຸ່ມຊາວກະສິກອນ;

13. ເປັນເຈົ້າການ ສ້າງຄວາມເຂັ້ມແຂງໃຫ້ພະນັກງານວິຊາການ ຂັ້ນເມືອງ ກ່ຽວກັບວຽກງານສຳຫຼວດ, ວາງແຜນນຳໃຊ້ທີ່ດິນກະສິກຳ, ການຜະລິດ ການນຳໃຊ້ຝຸ່ນ, ການປັບປຸງດິນ ແລະ ການແກ້ໄຂບັນຫາຂອງດິນຕໍ່ການປູກພືດ - ການລ້ຽງສັດ;

14. ປະສານສົມທົບເຂົ້າຮ່ວມ ໃນການສ້າງອາສາສະໝັກໝໍດິນ ໃຫ້ເໝາະສົມຕາມເງື່ອນໄຂ ແລະ ພຽງພໍ ເພື່ອເປັນຕົວແທນໃນການເຄື່ອນໄຫວວຽກງານ ຢູ່ໃນແຕ່ລະບ້ານ;

15. ສ້າງແຜນດຳເນີນງານ, ແຜນການ ແລະ ແຜນງົບປະມານ ປະຈຳປີ ພ້ອມທັງຄຸ້ມຄອງ, ຕິດຕາມ, ກວດກາ ສະຫຼຸບ-ຕີລາຄາ, ປະເມີນຜົນການຈັດຕັ້ງປະຕິບັດແຜນງານ, ແຜນການ ແລະ ກິດຈະກຳຕ່າງໆ ລວມທັງການໃຊ້ຈ່າຍງົບປະ ມານ ທີ່ຂະແໜງຮັບຜິດຊອບ ຢ່າງເປັນລະບົບຕໍ່ເນື່ອງ;

16. ປະສານສົມທົບເຂົ້າຮ່ວມ ການຈັດຕັ້ງປະຕິບັດ ບັນດາໂຄງການງົບປະມານຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ໃຫ້ໄປຕາມວຽກຈຸດສຸມຂອງແຂວງ ໃນແຕ່ລະໄລຍະ ໃຫ້ໄດ້ຜົນສຳເລັດເປັນຢ່າງດີ;

17. ສະຫຼຸບ, ສັງລວມ ຜົນການຈັດຕັ້ງປະຕິບັດວຽກງານ ປະຈຳອາທິດ, ປະຈຳເດືອນ, 3 ເດືອນ, 6 ເດືອນ, ໙ ເດືອນ ແລະ ປະຈຳປີ ເພື່ອລາຍງານໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

18. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 14 ໜ້າທີ່ ຂອງຂະແໜງພັດທະນາຊົນນະບົດ**

ຂະແໜງພັດທະນາຊົນນະບົດ ມີໜ້າທີ່ດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ, ລັດຖະບັນຍັດ, ມະຕິຕົກລົງ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແຈ້ງການ, ລະບຽບການ ແລະ ນິຕິກຳອື່ນໆຂອງຂັ້ນເທິງວາງອອກ;
2. ຈັດຕັ້ງຜັນຂະຫຍາຍ ນະໂຍບາຍຂອງພັກ, ດຳລັດ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳຕ່າງໆ ຂອງຂັ້ນເທິງວາງອອກ ມາເປັນແຜນງານ, ແຜນການ, ໂຄງການ ຂອງຂະແໜງການຕົນ;
3. ຍາດແຍ່ງເອົາການຮ່ວມມື ແລະ ການຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກວິທະຍາສາດຈາກພາຍໃນ ແລະ ພາຍນອກເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດບັນດາແຜນງານ, ແຜນການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ມີປະສິທິພາບ;
4. ເປັນເຈົ້າການ ໃນການຕິດຕາມຊຸກຍູ້ ບັນດາຂະແໜງການຂັ້ນແຂວງ ແລະ ເມືອງ ຈັດຕັ້ງກວດກາ ປະເມີນຜົນຄວາມ ທຸກຍາກ ແລະ ການພັດທະນາ ໃນແຕ່ລະໄລຍະ ແລະ ເປັນຜູ້ສັງລວມ, ວິເຄາະ-ວິໄຈ

ແລະ ສະຫຼຸບລາຍງານຕໍ່ຂັ້ນເທິງ ເພື່ອພິຈາລະນາຮັບຮອງ ແລະ ປະກາດໃຊ້ຜົນການກວດກາ-ປະເມີນຜົນຄວາມທຸກຍາກ ແລະ ການພັດທະນາໃນທົ່ວແຂວງ;

5. ເປັນກອງເລຂາ ໃນຂົງເຂດວຽກງານພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ, ຈັດສັນພູມລຳເນົາ, ອາຊີບ ແລະ ຄຸ້ມຄອງ ເຊື່ອມໂຍງລະບົບຖານຂໍ້ມູນ, ສະໜອງ, ນຳໃຊ້ ແລະ ເຜີຍແຜ່ຂໍ້ມູນ ຂ່າວສານກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ເຂົ້າເຖິງສະດວກ, ທັນການ ແລະ ທົ່ວເຖິງ;

6. ເປັນເຈົ້າການ ປະສານສົມທົບພາກສ່ວນກ່ຽວຂ້ອງຂອງແຂວງ ແລະ ເມືອງ ຄົ້ນຄວ້າກຳນົດຈຸດສຸມພັດທະນາທີ່ເປັນບຸລິມະສິດຂອງແຂວງ ແລະ ເມືອງໃນແຕ່ລະໄລຍະ (ລວມມີຈຸດສຸມພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ຈຸດສຸມຈັດສັນພູມລຳເນົາ ແລະ ອາຊີບໝັ້ນຄົງ, ຈຸດສຸມສ້າງບ້ານພັດທະນາ, ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ, ບ້ານແບບຢ່າງດ້ານກະສິກຳ) ພ້ອມທັງເປັນເຈົ້າການຕິດຕາມຊຸກຍູ້, ກວດກາປະເມີນຜົນການພັດທະນາຢູ່ແຕ່ລະຈຸດສຸມ ໃຫ້ໄປຕາມແຜນການ, ບັນລຸຄາດໝາຍທີ່ວາງໄວ້ ແລະ ຮັບປະກັນໃຫ້ມີການຫັນປ່ຽນໃໝ່ ຢ່າງຈະແຈ້ງ;

7. ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການກຳນົດແຜນການ, ໂຄງການລົງທຶນຂອງລັດກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ພ້ອມທັງຊຸກຍູ້ ຕິດຕາມ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດໂຄງການພັດທະນາຊົນນະບົດ ໃຫ້ໄດ້ຮັບຜົນດີ;

8. ສັງລວມ, ເກັບຂໍ້ມູນ ຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຖາວອນໃຫ້ປະຊາຊົນ ໃນເຂດເປົ້າໝາຍຍົກຍ້າຍ ແລະ ແກ້ໄຂບັນຫາ ການເຄື່ອນຍ້າຍຂອງພົນລະເມືອງແບບຊະຊາຍ, ດຸ່ນດ່ຽງປະຊາກອນ ຫຼື ກຳລັງແຮງງານກັບພື້ນທີ່ ຕາມຂັ້ນຕອນຈັດສັນພູມລຳເນົາ ແລະ ອາຊີບ ທີ່ກຳນົດໄວ້ໃນກົດໝາຍ;

9. ຄົ້ນຄ້ວາ, ກຳນົດຈຸດສຸມຈັດສັນພູມລຳເນົາ ແລະ ອາຊີບ ຂອງສູນກາງ ແລະ ທ້ອງຖິ່ນ (ຈຸດຍົກຍ້າຍປະຊາຊົນ, ຈຸດເຕົ້າໂຮມ), ຈຸດຈັດສັນສະເພາະແຕ່ລະໄລຍະພາຍໃນແຂວງ; ຄົ້ນຄ້ວາ, ສັງລວມ, ສ້າງແຜນ ການຈັດສັນພູມລຳເນົາ ແລະ ອາຊີບ ຕາມປະເພດ ຂອງການຈັດສັນພູມລຳເນົາ ແລະ ອາຊີບ ແລ້ວນຳສະເໜີຕໍ່ຄະນະກຳມະການຈັດສັນພູມລຳເນົາ ແລະ ອາຊີບ ຕາມຂັ້ນຄຸ້ມຄອງ;

10. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນ ການຈັດຕັ້ງປະຕິບັດກອງທຶນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເປັນຕົ້ນແມ່ນກອງທຶນພັດທະນາບ້ານ ແລະ ກອງທຶນອື່ນໆ ໃຫ້ເຄື່ອນໄຫວ ຢ່າງມີປະສິດທິຜົນສູງ ພ້ອມທັງສະຫຼຸບ, ຕີລາຄາໝາກຜົນຂອງການນຳໃຊ້ເງິນກອງທຶນ ເຂົ້າໃນວຽກງານລຶບລ້າງຄວາມທຸກຍາກ ແລະ ພັດ ທະນາກຸ່ມບ້ານ ທົ່ວແຂວງ;

11. ສະຫຼຸບ, ສັງລວມຜົນການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9ເດືອນ ແລະ ປະຈຳປີ ເພື່ອລາຍງານໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 15 ໜ້າທີ່ ຂອງກອງກວດກາປ່າໄມ້**

ກອງກວດກາປ່າໄມ້ ມີໜ້າທີ່ ດັ່ງນີ້

1. ປະຕິບັດແນວທາງນະໂຍບາຍຂອງພັກ, ກົດໝາຍ, ດຳລັດ, ຂໍ້ຕົກລົງ, ມະຕິ, ຄຳສັ່ງ, ຄຳແນະນຳ, ແຈ້ງການ, ນິຕິກຳອື່ນທີ່ຂັ້ນເທິງວາງອອກ ກ່ຽວກັບວຽກງານປ່າໄມ້, ທີ່ດິນປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າພ້ອມທັງຕິດຕາມ, ກວດກາການຈັດຕັ້ງປະຕິບັດວຽກງານ ດັ່ງກ່າວໃຫ້ໄດ້ຮັບຜົນດີ;

2. ໂຄສະນາ, ເຜີຍແຜ່ ບັນດາລະບຽບການ ທີ່ຕິດພັນກັບການປົກປັກຮັກສາ, ພັດທະນາ, ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນປ່າໄມ້ ສັດນ້ຳ-ສັດປ່າ ແລະ ເຄື່ອງປ່າຂອງດົງໃຫ້ໄດ້ຮັບຜົນດີ;

3. ຮັບ, ບັນທຶກການແຈ້ງຄວາມ, ທວງເອົາ ແລະ ກວດກາເອກະສານທີ່ເຫັນວ່າມີການລະເມີດລະບຽບ

ກົດໝາຍກ່ຽວກັບປ່າໄມ້ ແລະ ສັດນ້ຳ-ສັດປ່າ;

4. ເປັນເຈົ້າການ ເຂົ້າຮ່ວມ ໃນການສືບສວນ-ສອບສວນ ແລະ ດຳເນີນຄະດີ ກ່ຽວກັບຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້, ໄຟໄໝ້ລາມປ່າ, ເຄື່ອງປ່າຂອງດົງ, ຜະລິດຕະພັນໄມ້, ສັດນ້ຳ, ສັດປ່າ, ສິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ;

5. ປະສານສົມທົບ ກັບອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ອື່ນໆ ຂັ້ນທ້ອງຖິ່ນ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທຸກຂັ້ນ ທີ່ມີສ່ວນກ່ຽວຂ້ອງ ໃນວຽກງານກວດກາ ແລະ ການດຳເນີນຄະດີ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບພະຍາກອນປ່າໄມ້;

6. ຕິດຕາມ, ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງໄມ້, ເຄື່ອງປ່າຂອງດົງ, ສິ້ນເຂົ້າ, ສິ້ນອອກ ແລະ ຄົງສາງ ພາຍໃນໂຮງງານປຸງແຕ່ງໄມ້, ໂຮງເລື່ອຍ, ໂຮງຊອຍ, ໂຮງເຟີນີເຈີ້, ຮ້ານຂາຍໄມ້, ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ, ຢາງພາ ລາ, ເຕົາຖ່ານ, ສັດນ້ຳ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ;

7. ຕິດຕາມກວດກາ ການຂຸດຄົ້ນໄມ້, ຕັດໄມ້, ການຫັນປ່ຽນທີ່ດິນປ່າໄມ້, ບຸກລຸກທີ່ດິນປ່າໄມ້ ແລະ ການທຳລາຍປ່າໄມ້ ໃນຂອບເຂດ ທຸກປະເພດປ່າ ທີ່ໄດ້ກຳນົດໄວ້ໃນກົດໝາຍ ລວມທັງເຂດອຸທິຍານ;

8. ສະເໜີສ້າງຕັ້ງຈຸດກວດກາ (ກວດກາປ່າໄມ້ປະຈຳເຂດ), ພ້ອມທັງເປັນເຈົ້າການຕ້ານ ແລະ ສະກັດກັ້ນການລັກລອບຕັດໄມ້, ທຳລາຍປ່າໄມ້, ທີ່ດິນປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ-ສັດປ່າ ໃນຂອບເຂດທຸກປະເພດປ່າທີ່ໄດ້ກຳນົດໄວ້ໃນກົດໝາຍ;

9. ຊຸກຍູ້, ຕິດຕາມ ໜ່ວຍງານກວດກາປ່າໄມ້ຂັ້ນເມືອງ, ຈຸງານກວດກາປ່າໄມ້ບ້ານ ແລະ ດ່ານກວດກາຊັບພະຍາກອນປ່າໄມ້, ຈັດຕັ້ງນຳພາປະຊາຊົນ ສະກັດກັ້ນ ການລັກລອບທຳລາຍຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້ ຕາມທີ່ໄດ້ກຳນົດໄວ້ ໃນພາລະບົດບາດ, ໜ້າທີ່, ຂອບເຂດສິດ, ການປະຕິບັດກົດໝາຍ ແລະ ລະບຽບການຕ່າງໆ ຢ່າງເຂັ້ມງວດ;

10. ສ້າງຄວາມເຂັ້ມແຂງທາງດ້ານວິຊາສະເພາະ ກ່ຽວກັບວຽກງານກວດກາ ແລະ ດຳເນີນຄະດີກ່ຽວກັບຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້ ໃຫ້ແກ່ໜ່ວຍງານກວດກາປ່າໄມ້ຂັ້ນເມືອງ, ສ້າງແຫລ່ງຂ່າວຂໍ້ມູນຂ່າວສານ ທີ່ລະເມີດກັບກົດໝາຍປ່າໄມ້ ແລະ ດ່ານກວດກາຊັບພະຍາກອນປ່າໄມ້;

11. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງການຊ່ວຍເຫຼືອ ດ້ານທຶນຮອນ ແລະ ແລກປ່ຽນບົດຮຽນ ກ່ຽວກັບການກວດກາ ແລະ ດຳເນີນຄະດີ ກ່ຽວກັບຊັບພະຍາກອນປ່າໄມ້ ຕາມການອະນຸມັດ;

12. ສະຫຼຸບ, ສັງລວມຜົນການຈັດຕັ້ງປະຕິບັດວຽກງານກວດກາປ່າໄມ້ ປະຈຳເດືອນ, ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ເພື່ອລາຍງານໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

13. ປະຕິບັດໜ້າທີ່ອື່ນຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 16 ໜ້າທີ່ຂອງກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ**

ໜ້າທີ່ຂອງກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ມີດັ່ງນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ລັດຖະບັນຍັດ, ດຳລັດ, ມະຕິ, ຄຳສັ່ງ, ຂໍ້ຕົກລົງ ຄຳແນະນຳ, ແຈ້ງການ ແລະ ນິຕິກຳອື່ນໆ ຂອງຂັ້ນເທິງວາງອອກ;

2. ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ແຜນຍຸດທະສາດ ຂອງຂະແໜງການ ກະສິກຳ ແລະ ປ່າໄມ້ ມາເປັນແຜນງານ ແລະ ໂຄງການສະເພາະຂອງຕົນ ພ້ອມທັງ ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

3. ໂຄສະນາ, ເຜີຍແຜ່ບັນດາລະບຽບການ, ຄູ່ມືທາງດ້ານເຕັກນິກ ວິຊາການພາຍໃນກອງ ແລະ ນອກກອງ ທີ່ຕິດພັນກັບການອະນຸຮັກປົກປັກຮັກສາ, ພັດທະນາ, ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນປ່າໄມ້ ສັດນ້ຳ-ສັດປ່າ ແລະ ເຄື່ອງປ່າຂອງດົງໃຫ້ໄດ້ຮັບຜົນດີ;
4. ຄົ້ນຄ້ວາ ແລະ ກຳນົດຮູບແບບ ການພັດທະນາຊີວິດການເປັນຢູ່ ແບບຍືນຍົງຄຽງຄູ່ກັນກັບການອະນຸຮັກໃຫ້ກັບ ບ້ານທີ່ນອນຢູ່ໃນ ແລະ ນອກເຂດ ປ່າສະຫງວນ ແລະ ປ່າປ້ອງກັນ ເພື່ອສ້າງເປັນບ້ານພັດທະນາດ້ານກະສິກຳ ແລະ ປ່າໄມ້ ແບບຍືນຍົງຕິດພັນກັບການອະນຸຮັກ;
5. ເກັບກຳ, ສັງລວມ, ສ້າງ ແລະ ຄຸ້ມຄອງຂໍ້ມູນ-ຂ່າວສານ ດ້ານປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນປ່າໄມ້, ສັດນ້ຳ-ສັດປ່າ ແລະ ເຄື່ອງປ່າຂອງດົງ, ຖິ່ນທີ່ຢູ່ອາໄສສຳຄັນຂອງຊະນິດພັນ ພືດຕ່າງໆ, ຊະນິດພັນທີ່ຫາຍາກ ແລະ ໃກ້ຈະສູນພັນ ເພື່ອເປັນຂໍ້ມູນ ໃນການຮຽນຮູ້, ສຶກສາຄົ້ນຄ້ວາ ໃນໄລຍະສັ້ນ ກໍ່ຄືຍາວນານ ກ່ຽວກັບວຽກງານອະນຸຮັກ;
6. ປູກລະດົມຂົນຂວາຍ ໂຄສະນາເຜີຍແຜ່ ກົດໝາຍ, ລະບຽບການ ເພື່ອປຸກຈິດສຳນຶກ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ປະຊາຊົນ ໃນວຽກງານ ອະນຸຮັກ, ພ້ອມທັງຊຸກຍູ້ ອຳນາດການປົກຄອງທ້ອງຖິ່ນ ໃນການສ້າງຕັ້ງ ກຸ່ມວຽກຄຸ້ມຄອງປ່າໄມ້ຂັ້ນບ້ານ ໃນຮູບແບບ ສ້າງລະບຽບຄຸ້ມຄອງປ່າໄມ້, ດິນປ່າໄມ້, ຊັບພະຍາກອນປ່າໄມ້, ສັດນ້ຳ-ສັດປ່າ ແລະ ເຄື່ອງປ່າຂອງດົງ ຂັ້ນບ້ານ;
7. ສຳຫຼວດ ເກັບກຳຂໍ້ມູນ, ປັກຫລັກໝາຍ, ກຳນົດເຂດແດນ ໃນການນຳໃຊ້ປ່າໄມ້, ທີ່ດິນປ່າໄມ້ ເພື່ອສ້າງແຜນຈັດສັນໃນແຕ່ລະໄລຍະໃຫ້ລະອຽດເຊັ່ນ: ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນຳໃຊ້, ເຂດກັນຊົນ ແລະ ເຂດເປົ້າໝາຍ ເພື່ອການພັດທະນາຕ່າງໆ;
8. ປະສານສົມທົບ ແລະ ເຂົ້າຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາ ການຂຸດຄົ້ນ ແຮ່ທາດ, ຂຸດຄົ້ນໄມ້ ຈາກເຂດບຸກເບີກເນື້ອທີ່, ການກໍ່ສ້າງໂຄງລ່າງພື້ນຖານ ໃນຂອບເຂດປ່າສະຫງວນ ແລະ ປ່າປ້ອງກັນ ທີ່ລັດຖະ ບານອະນຸມັດ
9. ຄົ້ນຄ້ວາ ແລະ ປະກອບຄຳເຫັນ, ກ່ຽວກັບການສະເໜີ, ເຂົ້າຮ່ວມ ການດຳເນີນກິດຈະກຳ ການສຶກສາຄົ້ນຄ້ວາ ກ່ຽວກັບ ຊັບພະຍາກອນປ່າໄມ້, ສັດນ້ຳ-ສັດປ່າ ແລະ ເຄື່ອງປ່າຂອງດົງ, ແຫຼ່ງທ່ອງທ່ຽວທຳມະຊາດ ເພື່ອຈຸດປະສົງໃນການອະນຸຮັກ ແລະ ປົກປັກຮັກສາສິ່ງແວດລ້ອມ ໃນເຂດປ່າສະຫງວນ ແລະ ປ່າປ້ອງກັນໃຫ້ມີຄວາມຍືນຍົງ;
10. ຄຸ້ມຄອງ, ຕິດຕາມ, ກວດກາສະຖານທີ່, ໂຄງການລົງທຶນພາກເອກະຊົນ ພາຍໃນແລະຕ່າງປະເທດ ກ່ຽວກັບກິດຈະການປູກໄມ້, ກິດຈະກຳທ່ອງທ່ຽວທຳມະຊາດຢູ່ໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ເພື່ອໃຫ້ປະຕິບັດຕາມລະບຽບການ ທີ່ສັນຍາ ລະຫວ່າງຜູ້ປະກອບການກັບພາກລັດ;
11. ຊຸກຍູ້ ແລະ ສົ່ງເສີມວຽກງານ ກໍາເບ້ຍ, ປູກໄມ້, ຟື້ນຟູປ່າທຳມະຊາດ ແລະ ເຄື່ອງປ່າຂອງດົງ ໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ຕາມແຜນຈັດສັນ, ຄຸ້ມຄອງ ໃຫ້ມີຄວາມຍືນຍົງ;
12. ສຶກສາດ້ານທ່າແຮງ ແລະ ຄວາມຕ້ອງການຂອງຊາວບ້ານ ທີ່ນອນໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ແລະ ບໍລິເວນໃກ້ຄຽງ ກ່ຽວກັບການນຳໃຊ້ໄມ້, ພະລັງງານຈາກໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອສາທາລະນະປະໂຫຍດ ແລະ ປັບປຸງຊີວິດການເປັນຢູ່ ແນໃສ່ສ້າງລາຍຮັບເພີ່ມ ທີ່ຕິດພັນກັບການຈັດສັນ ອາຊີບຄົງທີ່ໃຫ້ຄອບຄົວພ້ອມທັງຊຸກຍູ້ຕິດຕາມກວດກາ ການປະຕິບັດ ແຜນນຳໃຊ້ ແລະ ລະບຽບທີ່ ໄດ້ກຳນົດໄວ້ໃນແຕ່ລະບ້ານ;
13. ຈັດຕັ້ງປະຕິບັດວຽກງານຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເຊື່ອມໂຊມ ພ້ອມທັງ ຕິດຕາມການຈ່າຍ ຄ່າບໍລິການສິ່ງແວດລ້ອມ ໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ໃຫ້ມີປະສິດທິຜົນສູງ;

14. ກວດກາລາດຕາເວນ, ຕ້ານ ແລະ ສະກັດກັ້ນ ຜູ້ກະທຳຜິດ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ, ເກັບກຳຂໍ້ມູນຫຼັກຖານ ຂອງຜູ້ກະທຳຜິດ ເພື່ອສະໜອງໃຫ້ແກ່ເຈົ້າໜ້າທີ່ກວດກາປ່າໄມ້ ໃນການປະກອບສຳນວນຄະດີສົ່ງຟ້ອງ ຕາມຂະບວນການຍຸຕິທຳ;

15. ຂຶ້ນແຜນງົບປະມານ ແລະ ຈັດຕັ້ງປະຕິບັດ ບັນດາກິດຈະກຳໂຄງການຂອງລັດ, ໂຄງການຊ່ວຍເຫຼືອລ້າ ແລະ ທຶນກູ້ຢືມຕ່າງໆ ກ່ຽວກັບວຽກຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ໃຫ້ໄປຕາມວຽກ ຈຸດສຸມຂອງແຂວງ, ວຽກຈຸດສຸມ ຂອງການພັດທະນາເສດຖະກິດ-ສັງຄົມຂອງແຂວງໃນແຕ່ລະໄລຍະ ທັງຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ; ມີການຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ໃຫ້ໄດ້ຜົນສຳເລັດເປັນຢ່າງດີ;

16. ສະຫຼຸບ, ສັງລວມຜົນການຈັດຕັ້ງປະຕິບັດວຽກງານ ປະຈຳເດືອນ, ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ເພື່ອລາຍງານໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

17. ປະຕິບັດໜ້າທີ່ອື່ນໆ ຕາມການຕົກລົງ ແລະ ການມອບໝາຍຂອງຂັ້ນເທິງ;

**ມາດຕາ 17 ກອງຄຸ້ມຄອງອຸທິຍານແຫ່ງຊາດຫີນໜາມໜໍ່**

ໜ້າທີ່ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດຫີນໜາມໜໍ່ ມີດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິ ຂອງສະພາແຫ່ງຊາດ, ລັດຖະບັນຍັດ, ດຳລັດ, ມະຕິ ຂອງລັດຖະບານ, ຄຳສັ່ງ, ຂໍ້ຕົກລົງ, ແຈ້ງການ, ຄຳແນະນຳ ແລະ ນິຕິກຳອື່ນ ຂອງຂັ້ນເທິງວາງອອກ;

2. ຄົ້ນຄວ້າ, ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ບັນດານິຕິກຳ, ແຜນຍຸດທະສາດຂອງຂະແໜງການກະສິກຳ ແລະ ປ່າໄມ້ ມາເປັນແຜນງານ ແລະ ໂຄງການສະເພາະຂອງຕົນ, ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງ ປະຕິບັດໃຫ້ໄດ້ຮັບຜົນດີ;

3. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍ ບັນດາລະບຽບການ ແລະ ຄູ່ມື ທາງດ້ານເຕັກນິກວິຊາການ ຂອງພາຍໃນ ແລະ ສາກົນ ທີ່ຕິດພັນກັບ ການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນໃຫ້ໄດ້ຮັບຜົນດີ;

4. ເປັນເຈົ້າການຈັດຕັ້ງປະຕິບັດວຽກງານ ຕາມແຜນຄຸ້ມຄອງ-ຈັດສັນອຸທິຍານແຫ່ງຊາດຫີນໜາມໜໍ່ ໂດຍຜ່ານການປະສານງານກັບຂະແໜງການຂັ້ນແຂວງ, ຫ້ອງການຂັ້ນເມືອງ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;

5. ເປັນເຈົ້າການ ປະສານສົມທົບກັບຂະແໜງການສາຍຕັ້ງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການສຳຫຼວດເກັບກຳຂໍ້ມູນ, ກຳນົດເຂດແດນ ວາງແຜນນຳໃຊ້ທີ່ດິນ ແລະ ປ່າໄມ້ ໃນ ການກຳນົດແຜນຈັດສັນ ໃນແຕ່ລະໄລຍະໃຫ້ລະອຽດ ເຊັ່ນ: ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນຳໃຊ້, ເຂດກັນຊົນ ແລະ ເຂດເປົ້າໝາຍ ເພື່ອການພັດທະນາ ຂອງລັດຖະບານ;

6. ຄົ້ນຄວ້າ ແລະ ກຳນົດຮູບແບບການພັດທະນາຊີວິດການເປັນຢູ່ ຄຽງຄູ່ກັບການອະນຸລັກ ໃຫ້ແກ່ບ້ານທີ່ຢູ່ໃນ ແລະ ອ້ອມຂ້າງ ອຸທິຍານແຫ່ງຊາດຫີນໜາມໜໍ່, ເພື່ອສ້າງເປັນບ້ານພັດທະນາດ້ານກະສິກຳ ແລະ ປ່າໄມ້ ຕິດ ພັນກັບການອະນຸລັກ;

7. ເປັນເຈົ້າການເກັບກຳ, ສັງລວມ, ສ້າງ ແລະ ຄຸ້ມຄອງຂໍ້ມູນ-ຂ່າວສານ ດ້ານທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບ ພະຍາກອນປ່າໄມ້, ຖິ່ນທີ່ຢູ່ອາໄສສຳຄັນຂອງຊະນິດພັນພືດ ແລະ ສັດປ່າທີ່ຫາຍາກໃກ້ຈະສູນພັນ ເພື່ອສ້າງເປັນຖານຂໍ້ມູນ, ສູນຮຽນຮູ້ໃຫ້ແກ່ການສຶກສາຄົ້ນຄວ້າ ກ່ຽວກັບການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ໃຫ້ມີຄວາມຍືນຍົງ;

8. ເປັນເຈົ້າການປຸກລະດົມ ຂົນຂວາຍ, ໂຄສະນາ ເຜີຍແຜ່ກົດໝາຍ, ລະບຽບການເພື່ອປຸກຈິດສຳນຶກ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນ ພ້ອມທັງຊຸກຍູ້ອົງການປົກຄອງບ້ານ, ໃນການສ້າງຕັ້ງຄະນະ

ຄຸ້ມຄອງຮ່ວມຂັ້ນບ້ານລວມທັງການອອກລະບຽບການຄຸ້ມຄອງທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້;

9. ຄົ້ນຄວ້າ ແລະ ປະກອບຄຳເຫັນ ກ່ຽວກັບການສະເໜີຂໍດຳເນີນກິດຈະການສຶກສາ, ຄົ້ນຄວ້າກ່ຽວກັບຊັບ ພະຍາກອນປ່າໄມ້, ສັດນ້ຳ-ສັດປ່າ ແລະ ແຫຼ່ງທ່ອງທ່ຽວທຳມະຊາດ ເພື່ອຈຸດປະສົງການອະນຸລັກສິ່ງແວດລ້ອມ;

10. ເປັນເຈົ້າການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ, ກວດກາສະຖານທີ່ກິດຈະການທ່ອງທ່ຽວທຳມະຊາດ ຢູ່ໃນອຸທິຍານແຫ່ງຊາດ ຫີນໜາມໜໍ່ ເພື່ອໃຫ້ປະຕິບັດຕາມລະບຽບການ ແລະ ສັນຍາ ທີ່ຂັ້ນເທິງວາງອອກ;

11. ເປັນເຈົ້າການຊຸກຍູ້ ແລະ ສົ່ງເສີມວຽກງານການກ້າເບ້ຍ, ປູກໄມ້, ຟື້ນຟູປ່າ ແບບທຳມະຊາດ ແລະ ເຄື່ອງປ່າຂອງດົງ ຕາມແຜນຈັດສັນ-ຄຸ້ມຄອງ ໃຫ້ຍືນຍົງ ເພື່ອປົກປັກຮັກສາຖິ່ນທີ່ຢູ່ອາໄສສຳຄັນ ຂອງຊະນິດພັນພືດ, ພັນສັດປ່າທີ່ຫາຍາກ ໃກ້ຈະສູນພັນ ແລະ ວຽກງານສະກັດກັ້ນໄຟໄໝ້ລາມປ່າ;

12. ສຶກສາທ່າແຮງ ແລະ ຄວາມຕ້ອງການຂອງບ້ານ ກ່ຽວກັບການນຳໃຊ້ໄມ້, ໄມ້ພະລັງງານ ແລະ ເຄື່ອງປ່າຂອງດົງ, ເພື່ອສາທາລະນະປະໂຫຍດ ແລະ ປັບປຸງຊີວິດການເປັນຢູ່ແນໃສ່ສ້າງລາຍໄດ້ເພີ່ມທີ່ຕິດພັນກັບການຈັດສັນອາຊີບຄົງທີ່ໃຫ້ຄອບຄົວ, ພ້ອມທັງຊຸກຍູ້, ຕິດຕາມ, ກວດກາ, ການປະຕິບັດແຜນການນຳໃຊ້ ແລະ ລະບຽບການທີ່ໄດ້ກຳນົດໃຫ້ແຕ່ລະບ້ານ;

13. ສົມທົບ ແລະ ເຂົ້າຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມ, ກວດກາການຂຸດຄົ້ນແຮ່ທາດ, ຂຸດຄົ້ນໄມ້, ເຂດບຸກເບີກເນື້ອທີ່, ເຂດກໍ່ສ້າງພື້ນຖານໂຄງລ່າງ ຢູ່ໃນອຸທິຍານແຫ່ງຊາດ ຫີນໜາມໜໍ່ ທີ່ລັດຖະບານອະນຸມັດ;

14. ປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ຈາກການທຳລາຍປ່າໄມ້ ທີ່ເຮັດໃຫ້ປ່າເຊື່ອມໂຊມ ແລະ ການຈ່າຍຄ່າບໍລິການສິ່ງແວດລ້ອມໃນເຂດອຸທິຍານແຫ່ງຊາດຫີນໜາມໜໍ່ໃຫ້ມີປະສິດທິຜົນສູງ;

15. ເປັນເຈົ້າການ ກວດກາລາດຕະເວນ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ຖ້າພົບເຫັນການລະເມີດລະບຽບການທີ່ຮ້າຍແຮງ ຕ້ອງສັ່ງຢຸດຕິ, ກັກ, ຍຶດ, ເກັບກຳຂໍ້ມູນ, ຫຼັກຖານ ແລະ ສະໜອງຂໍ້ມູນພື້ນຖານໃຫ້ແກ່ເຈົ້າໜ້າທີ່ກວດກາປ່າໄມ້ປະ ກອບສຳນວນຄະດີສົ່ງໃຫ້ໄອຍະການສັ່ງຟ້ອງສານເພື່ອຕັດສິນດຳເນີນຄະດີຕາມຂະບວນການຍຸຕິທຳ;

16. ຍາດແຍ່ງເອົາການຮ່ວມມື ແລະ ການຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກວິທະຍາສາດ-ວິຊາການ ຈາກພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ ບັນດາແຜນງານ, ແຜນການໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;

17. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການ, ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນການປະຕິບັດວຽກງານ ຂອງຊ່ວຍຊານພາຍໃນ ແລະ ຕ່າງປະເທດ ລວມທັງການອຳນວຍຄວາມສະດວກ ເຄື່ອນໄຫວປະຕິບັດໜ້າທີ່ໃນຂອບເຂດຄວາມຮັບຜິດຊອບຂອງ ອຸທິຍານແຫ່ງຊາດ ຫີນໜາມໜໍ່ ແລະ ດ້ານເອກະສານທາງການ;

18. ສະຫຼຸບ, ສັງລວມຜົນການຈັດຕັ້ງປະຕິບັດວຽກງານ ປະຈຳເດືອນ, ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ເພື່ອລາຍງານໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

19. ປະຕິບັດໜ້າທີ່ອື່ນໆ ຕາມການຕົກລົງ ແລະ ການມອບໝາຍຂອງຂັ້ນເທິງ;

**ມາດຕາ 18 ສູນພັດທະນາກະສິກຳເຊບັ້ງໄຟ**

ໜ້າທີ່ຂອງສູນພັດທະນາກະສິກຳເຊບັ້ງໄຟ ມີດັ່ງນີ້:

1. ຜັນຂະຫຍາຍແຜນຍຸດທະສາດການພັດທະນາ ວຽກສົ່ງເສີມກະສິກຳ ແລະ ສະຫະກອນຂອງຕົນ ເປັນແຜນການ ແລະ ໂຄງການລະອຽດ ເພື່ອຈັດຕັ້ງປະຕິບັດ ຕາມບົດບາດໜ້າທີ່ຂອງຕົນໃຫ້ປະກົດຜົນເປັນຈິງ;
2. ສົ່ງເສີມການນຳໃຊ້ຜົນສຳເລັດທາງດ້ານວິທະຍາສາດ, ອຸປະກອນກົນຈັກກະສິກຳ, ວິທີການກະເສດຊຸມ ແລະ ແບບປະສົມປະສານ ເພື່ອຍົກສະມັດຖະພາບ, ຄຸນນະພາບຂອງຜົນຜະລິດ ແລະ ມີໂພຊະນາການ ຕາມຫຼັກການກະສິກຳສະອາດ, ປອດໄພ ແລະ ເປັນມິດຕໍ່ສິ່ງແວດລ້ອມ;
3. ຝຶກອົບຮົມ ແລະ ສາທິດ ເຕັກນິກ, ເຕັກໂນໂລຊີ, ນະວັດຕະກຳ ແລະ ທັກສະກະສິກຳສະໄໝໃໝ່ ເຂົ້າໃນການປູກ, ການລ້ຽງ ແບບປະສົມປະສານ ຕາມຫຼັກການກະສິກຳສະອາດ; ການອົບ, ຕາກ, ຄັດແຍກ, ຈັດເກຣດ, ຫຸ້ມຫໍ່ ເພື່ອສ້າງມູນຄ່າເພີ່ມ ແລະ ການຕະຫຼາດ ໃຫ້ແກ່ຊາວກະສິກອນ, ກຸ່ມຜູ້ຜະລິດ, ກຸ່ມປຸງແຕ່ງ ແລະ ຜູ້ປະກອບການທຸລະກິດກະສິກຳ ລວມທັງຮ່ວມຈັດງານວາງສະແດງສິນຄ້າກະສິກຳ;
4. ສ້າງຂີດຄວາມສາມາດຂອງນັກສົ່ງເສີມ ຂັ້ນເມືອງ, ສະຖານີບໍລິການເຕັກນິກກະສິກຳ ແລະ ວິຊາການບ້ານ ໃຫ້ມີຄວາມເຂັ້ມແຂງ ໃນການປະຕິບັດວຽກສາທິດ, ຝຶກອົບຮົມ, ການຖ່າຍທອດບໍລິການເຕັກນິກການປູກ, ການລ້ຽງ, ການປຸງແຕ່ງ ແລະ ການຕະຫຼາດ; ວິທີການສ້າງຕັ້ງ ແລະ ຄຸ້ມຄອງກອງທຶນ; ການຈັດທັດສະນະສຶກສາແລກປ່ຽນບົດຮຽນ;
5. ຜະລິດແນວພັນເຂົ້າຈຸ້ມສາມ, ແນວພັນ ພືດ, ສັດ ແລະ ສັດນ້ຳ ພ້ອມທັງຊຸກຍູ້ສົ່ງເສີມການຜະລິດ ແລະ ນຳໃຊ້ແນວພັນດັ່ງກ່າວໃຫ້ກວ້າງຂວາງ ເພື່ອຕອບສະໜອງແນວພັນໃຫ້ແກ່ການຜະລິດສິນຄ້າຮັບໃຊ້ພາຍ ໃນທົດແທນການນຳເຂົ້າ ແລະ ຜະລິດສິນຄ້າທີ່ມີຕະຫຼາດ, ມີສັນຍາແລ້ວເພື່ອສົ່ງອອກ ດ້ວຍການປະສານສົມທົບກັບ ບັນດາຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຂະຫຍາຍຕາໜ່າງການຜະລິດແນວພັນ ຂອງຄອບຄົວ, ຟາມ, ຫົວໜ່ວຍທຸລະກິດ, ກຸ່ມ, ສະຫະກອນ ໃຫ້ຖືກຕ້ອງຕາມຂະບວນການ, ຂັ້ນຕອນດ້ານວິຊາການ ແລະ ມີຕາໜ່າງການ ກວດສອບ, ຢັ້ງຢືນຄຸນນະພາບແນວພັນ;
6. ປະສານສົມທົບກັບ ຜູ້ປະກອບການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອໃຫ້ມີກົນໄກການບໍລິການ ແຫຼ່ງທຶນ, ສິນເຊື່ອ, ປັດໄຈການຜະລິດ, ແນະນຳເຕັກນິກວິຊາການ ແລະ ການເຂົ້າເຖິງຕະຫຼາດ ໃຫ້ແກ່ກຸ່ມ, ສະຫະກອນ ແລະ ຊາວກະສິກອນ ເພື່ອຍົກປະລິມານ ແລະ ຄຸນນະພາບ ຂອງຜົນຜະລິດກະສິກຳ ຕາມທິດ ຫັນເປັນກົນຈັກທັນສະໄໝ, ສີຂຽວ ແລະ ຍືນຍົງ;
7. ສົ່ງເສີມການຈັດຕັ້ງເປັນ ກຸ່ມ, ຟາມ ແລະ ຫົວໜ່ວຍທຸລະກິດກະສິກຳ ແບບຜູກພັນຕາມສັນຍາ ໃຫ້ເປັນຂະບວນກວ້າງຂວາງ ກ້າວໄປສູ່ການສ້າງເປັນສະຫະກອນ ຫຼື ເປັນຫົວໜ່ວຍເສດຖະກິດຮ່ວມມີໃນຮູບແບບຕ່າງໆ ໃຫ້ມີຄວາມເຂັ້ມແຂງເພື່ອປັບປຸງການຜະລິດເປັນສິນຄ້າພາຍໃນ ແລະ ທົດແທນການນຳເຂົ້າ, ເປັນສະບຽງອາຫານ-ໂພຊະນາການ ໃຫ້ມີຄຸນນະພາບ;
8. ຄົ້ນຄ້ວາ, ເກັບກຳ, ສັງລວມ, ຂຶ້ນບັນຊີ, ຂຶ້ນທະບຽນກຸ່ມຜະລິດ ພ້ອມທັງຄຸ້ມຄອງ, ຕິດຕາມຊຸກຍູ້ ແລະ ກວດກາການເຄື່ອນໄຫວຂອງກຸ່ມຜະລິດ ໃຫ້ມີປະສິດທິຜົນສູງ ແລະ ໄປຕາມລະບຽບການທີ່ກຳນົດໄວ້;
9. ຄົ້ນຄວ້າ, ພິຈາລະນາມີຄຳເຫັນຕໍ່ການຂໍອະນຸມັດສ້າງຕັ້ງ, ໂຮມ, ແຍກ ຫຼື ຍົກເລີກກຸ່ມຜະລິດ ແລະ ສະຫະກອນກະສິກຳຕາມລະບຽບການ;
10. ເອື້ອອຳນວຍ ໃຫ້ກຸ່ມການຜະລິດພາຍໃນແຂວງ ສາມາດເຂົ້າເຖິງແຫຼ່ງທຶນ, ສິນເຊື່ອ, ປັດໃຈການຜະລິດ, ວິທະຍາສາດເຕັກນິກ ແລະ ຕະຫລາດ ຕະຫລອດເຖິງການເຂົ້າຮ່ວມທັດສະນະສຶກສາ, ຝຶກອົບຮົມ ຍົກລະດັບຄວາມຮູ້ໃນດ້ານຕ່າງໆດ້ວຍມາດຕະການ ແລະ ເງື່ອນໄຂທີ່ເໝາະສົມ;
11. ສ້າງແຜນງົບປະມານ, ກິດຈະກຳ ແລະ ສະຫຼຸບລາຍງານຢ່າງເປັນປົກກະຕິ; ນຳສະເໜີຂໍອະນຸມັດໂຄງການ, ງົບປະມານຂອງລັດ ແລະ ແຫຼ່ງທຶນອື່ນໆ ພ້ອມທັງຄຸ້ມຄອງນຳໃຊ້ຊັບສິນ, ງົບປະມານ, ຊັບພະຍາກອນຂອງສູນ ໃຫ້ມີປະສິດທິພາບ, ໂປ່ງໃສ ແລະ ສາມາດກວດສອບໄດ້;

12. ປະສານງານ, ຮ່ວມມືກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຍາດແຍ່ງການຊ່ວຍເຫຼືອ ທາງດ້ານງົບປະມານ ແລະ ເຕັກນິກວິຊາການ ບົນພື້ນຖານການຕົກລົງເຫັນດີຂອງກົມ;
13. ປະຕິບັດໜ້າທີ່ອື່ນໆ ຕາມການຕົກລົງ ແລະ ການມອບໝາຍຂອງຂັ້ນເທິງ;

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 19 ຫຼັກການ**

ພະແນກກະສິກໍາ ແລະ ປ່າໄມ້ ແຂວງຄໍາມ່ວນ ເຄື່ອນໄຫວຕາມຫຼັກການ ດັ່ງລຸ່ມນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມ ຂອງພະແນກ;
2. ປະຕິບັດລະບອບຫົວໜ້າດຽວ ຕາມການແບ່ງຂັ້ນຄຸ້ມຄອງ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງລະອຽດຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມ ຂອງພັກ-ລັດ; ນໍາເອົາແນວທາງຂອງພັກ-ລັດຖະບານ, ແຜນການ ປະຈໍາປີ, ແຜນ 5 ປີ ຂອງກະຊວງກະສິກໍາ ແລະ ປ່າໄມ້ ແລະ ຂອງອົງການປົກຄອງແຂວງຄໍາມ່ວນ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 20 ແບບແຜນວິທີເຮັດວຽກ**

ພະແນກກະສິກໍາ ແລະ ປ່າໄມ້ ແຂວງຄໍາມ່ວນ ມີແບບແຜນວິທີເຮັດວຽກ ດັ່ງລຸ່ມນີ້:

1. ທຸກການເຄື່ອນໄຫວຂອງພະແນກກະສິກໍາ ແລະ ປ່າໄມ້ ແຂວງ ແມ່ນອີງໃສ່ຫຼັກການ ແລະ ລະບຽບ ຂອງອົງການປົກຄອງແຂວງ ແລະ ກະຊວງກະສິກໍາ ແລະ ປ່າໄມ້;
2. ເຮັດວຽກຢ່າງມີແຜນການ, ແຜນງານ ແລະ ໂຄງການລະອຽດ;
3. ມີການປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງຢ່າງແໜ້ນແຟ້ນ ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ເປົ້າໝາຍ ໃນແຕ່ລະໄລຍະ;
4. ປະຕິບັດລະບອບປະຊຸມ ປະຈໍາເດືອນ, 3 ເດືອນ, 6 ເດືອນ, ປະຈໍາປີ ແລະ ກອງປະຊຸມວິສາມັນຕ່າງໆ ເພື່ອຊຸກຍູ້ຕິດຕາມ ແລະ ກວດກາ, ເກັບກໍາສະພາບລວມ ແລະ ສະເພາະດ້ານຈາກຂົງເຂດວຽກງານ ສັງລວມລາຍງານ ໃຫ້ເຈົ້າແຂວງ ແລະ ລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນປົກກະຕິ;

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 21 ງົບປະມານ ແລະ ຕາປະທັບ**

ພະແນກກະສິກໍາ ແລະ ປ່າໄມ້ ແຂວງຄໍາມ່ວນ ມີງົບປະມານ ແລະ ຕາປະທັບເປັນຂອງຕົນເພື່ອ ໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 22 ການຈັດຕັ້ງປະຕິບັດ**

ພະແນກກະສິກໍາ ແລະ ປ່າໄມ້ ແຂວງຄໍາມ່ວນ, ບັນດາຫ້ອງການ, ຂະແໜງ, ກອງ, ສູນ, ພະແນກການອ້ອມຂ້າງແຂວງ; ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງ ກະຊວງກະສິກໍາ ແລະ ປ່າໄມ້ ແລະ ພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 23 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຫ້ປ່ຽນແທນຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງຄຳມ່ວນ ສະບັບເລກທີ 1888/ຈຂ, ລົງວັນທີ 1 ພະຈິກ 2022.

ເຈົ້າແຂວງ

ວັນໄຊ ພອງສະຫວັນ